# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01 - 10 ຕຸລາ 2023

ປີທີ 12

ສະບັບທີ 940

ລາຍສັບປະດາ


## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນກັນຍາ 2023

(ສພຊ) ເພື່ອພິຈາລະນາ ແລະ ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ມີປະສິດທິພາບ ແລະ ປະສິດທິຜົນ; ໃນລະຫວ່າງວັນທີ 28-29 ກັນຍາ 2023 ທີ່ສະພາແຫ່ງຊາດນະຄອນຫຼວງວຽງຈັນ ໄດ້ດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນກັນຍາ 2023 ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ, ກຳມະການຄະນະປະຈຳສະພາແຫ່ງ



ຊາດ ແລະ ແຂກຖືກເຊີນ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.

ໃນກອງປະຊຸມ, ໄດ້ຮັບຟັງການລາຍງານແຜນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX; ລາຍງານແຜນການດຳເນີນກອງປະຊຸມຮ່ວມ ລະຫວ່າງ ຄະນະປະຈຳສະພາແຫ່ງຊາດ ກັບ ຄະນະລັດຖະບານ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ສູນກາງແນວລາວສ້າງຊາດ. ສະຫະພັນນັກຮົບເກົ່າແຫ່ງຊາດລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ; ລາຍງານຜົນການກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍ 7 ສະບັບ ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຄື: ຮ່າງກົດໝາຍວ່າດ້ວຍການຮັກສາສຸຂະພາບຂັ້ນຕົ້ນ (ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍເຂດເສດຖະກິດພິເສດ (ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍການປິ່ນປົວ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍຜູ້ພິພາກສາ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ); ລາຍງານການກະກຽມຄວາມພ້ອມກອງປະຊຸມຄົບຄະນະຂອງກຳມາທິການບັນດາເຜົ່າ ປະຈຳປີ 2023; ລາຍງານຜົນການເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດການກໍ່ສ້າງ, ບູລະນະສ້ອມແປງປ້ອງກັນຕາຝັ່ງເຈື່ອນຕາມແລວທາງແມ່ນ້ຳທີ່ເປັນຊາຍແດນລະຫວ່າງຊາດ, ເສັ້ນທາງສາຍຫຼັກ ແລະ ເສັ້ນທາງຫຼວງແຫ່ງຊາດຢູ່ແຂວງສະຫວັນນະເຂດ, ຄຳມ່ວນ ແລະ ບໍລິຄຳໄຊ; ລາຍງານການແກ້ໄຂບັນຫາເຄັ່ງຮ້ອນຂອງເສດຖະກິດ-ການເງິນ, ບັນຫາເງິນເຟີ້, ອັດຕາແລກປ່ຽນ

ອ່ານຕໍ່ໜ້າ 2

## ຂ່າວໜ້າໃນ




ສຳເລັດການເຜີຍແຜ່... (ໜ້າ 2)



ເຊີດຊູມູນເຊື້ອດຸໝັ່ນ... (ໜ້າ 9)




ຢ່າໃຫ້ກະແສຂ່າວໂລເລ... (ໜ້າ 12)


## ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ຮ່າງກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ

(ສພຊ) ໃນວັນທີ 25-26 ກັນຍາ 2023 ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໄດ້ຈັດກອງປະຊຸມກວດກາເນື້ອໃນຮ່າງກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານປະທານ, ຮອງປະທານກຳມາທິການສະພາແຫ່ງຊາດ, ທ່ານຮອງລັດຖະ



ມົນຕີກະຊວງຍຸຕິທຳ, ທ່ານຮອງຫົວໜ້າຫ້ອງວ່າການປະທານປະເທດ, ຄະນະທີ່ປຶກສາດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານຫົວໜ້າກົມ, ຮອງຫົວໜ້າກົມ ແລະ ພະນັກງານ-ລັດຖະກອນ ຈາກສະພາແຫ່ງຊາດ ແລະ ກະຊວງ, ອົງການກ່ຽວຂ້ອງ.

ໃນກອງປະຊຸມ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ກ່າວວ່າ: ໃນໄລຍະຜ່ານມາ, ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ປັບປຸງມາແລ້ວ 1 ຄັ້ງ ໃນປີ 2016 ເປັນເວລາ 7 ປີ ເຊິ່ງໄດ້ເປັນບ່ອນອີງໃນການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ

ອ່ານຕໍ່ໜ້າ 3

## ກວດກາເນື້ອໃນຮອບດ້ານ ຮ່າງກົດໝາຍວ່າດ້ວຍເຂດເສດຖະກິດພິເສດ (ສ້າງໃໝ່)

(ສພຊ) ເພື່ອຮັບປະກັນທາງດ້ານເນື້ອໃນຂອງຮ່າງກົດໝາຍວ່າດ້ວຍເຂດເສດຖະກິດພິເສດ (ສ້າງໃໝ່) ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ມີການຄົ້ນຄວ້າ ເຮັດໃຫ້ຮ່າງກົດໝາຍມີຄວາມຮັດກຸມ, ຈະແຈ້ງ, ສອດຄ່ອງກັບແນວທາງນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍອື່ນ, ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ແລະ ແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະ ເພື່ອເປັນການລະດົມສະຕິປັນຍາຈາກທຸກພາກສ່ວນທີ່ກ່ຽວຂ້ອງ



ກັບການສ້າງ ແລະ ປັບປຸງກົດໝາຍ ກ່ອນນຳສະເໜີກອງປະຊຸມຄະນະປະຈຳສະພາແຫ່ງຊາດພິຈາລະນານຳເຂົ້າກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX. ໃນລະຫວ່າງວັນທີ 22-23 ກັນຍາ 2023 ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໄດ້ສຳເລັດກອງປະຊຸມກວດກາເນື້ອໃນຮອບດ້ານ ຮ່າງກົດໝາຍວ່າດ້ວຍເຂດເສດຖະກິດພິເສດ (ສ້າງໃໝ່) ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ອຳໄພ ຈິດມານົບ ຮອງປະທານກຳມາທິການກົດໝາຍ, ທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງລັດຖະມົນຕີກະຊວງແຜນການ

ອ່ານຕໍ່ໜ້າ 3

## ຄະນະມິດຕະພາບລັດຖະສະພາ ຝຣັ່ງ-ລາວ ຢ້ຽມຢາມ ສປປ ລາວ



(ສພຊ) ຄະນະມິດຕະພາບລັດຖະສະພາ ຝຣັ່ງ-ລາວ ຂອງສະພາແຫ່ງຊາດ ແຫ່ງ ສ. ຝຣັ່ງ ນຳໂດຍທ່ານ ບຣູໂນ ມິລຽນແນ (Bruno MIL-LIENNE) ສະມາຊິກສະພາແຫ່ງຊາດ, ປະທານຄະນະມິດຕະພາບລັດຖະສະພາ ຝຣັ່ງ-ລາວ, ສະພາແຫ່ງຊາດ ແຫ່ງ ສ. ຝຣັ່ງ ຢ້ຽມຢາມ ແລະ ເຮັດ

ອ່ານຕໍ່ໜ້າ 4

## ສສຊ ແລະ ສສຂ ແຂວງບໍລິຄຳໄຊ ພົບປະຢ້ຽມຢາມພະນັກງານລັດຖະກອນເມືອງວຽງທອງ

(ສພຊ) ເພື່ອປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ແລະ ເຮັດໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ ແລະ ເຂົ້າໃຈ ຕໍ່ແນວທາງນະໂຍບາຍ



ຂອງພັກ, ລະບຽບກົດໝາຍຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ, ຂອງ

ອ່ານຕໍ່ໜ້າ 4

## ປະທານກຳມາທິການບັນດາເຜົ່າ ຢ້ຽມຢາມ ແລະ ເຮັດວຽກ ຢູ່ ສສ. ຫວຽດນາມ



(ສພຊ) ໃນລະຫວ່າງວັນທີ 20-25 ກັນຍາ 2023 ຄະນະຜູ້ແທນກຳມາທິການບັນດາເຜົ່າ ນຳໂດຍສະຫາຍ ຄຳຈັນ ໂສຕາປະເສີດ ກຳມະການຄະນະປະຈຳ, ປະທານກຳມາທິການ

ອ່ານຕໍ່ໜ້າ 4

## ກອງປະຊຸມ...

(ຕໍ່ຈາກໜ້າ 1)



ເງິນຕາ, ລາຄາສິນຄ້າ ແລະ ໜີ້ສິນຕ່າງປະເທດ; ພ້ອມນັ້ນ, ກອງປະຊຸມຍັງໄດ້ພິຈາລະນາໜັງສືສະເໜີຂອງລັດຖະບານກ່ຽວກັບການຂໍເລື່ອນເວລາໃນການຈັດຕັ້ງປະຕິບັດ ມາດຕາ 36, 39 ແລະ 100 ຂອງກົດໝາຍວ່າດ້ວຍປະກັນໄພ; ໜັງສືສະເໜີຂອງລັດຖະບານກ່ຽວກັບການສະເໜີຂໍດັດປັບລັດຖະບັນຍັດວ່າດ້ວຍຄ່າທຳນຽມທາງ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2012 (ສະບັບປັບປຸງ ປີ 2021) ພາກທີ III ຄ່າທຳນຽມ ແລະ ຄ່າບໍລິການຂົງເຂດຕ່າງປະເທດ; ໜັງສືສະເໜີຂອງລັດຖະບານ ກ່ຽວກັບການຂໍນະໂຍບາຍຜ່ອນຜັນການປະຕິບັດມາດຕາ 52 (ທຶນຈົດທະບຽນໃນກິດຈະການສຳປະທານ) ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016 ຂອງໂຄງການສຳປະທານທ່າບົກ-ທ່ານາແລ້ງ ແລະ ເຂດໂລຊິດສະຕິກ ນະຄອນຫຼວງວຽງຈັນ.

ຈາກນັ້ນ, ບັນດາຜູ້ແທນກອງປະຊຸມໄດ້ເອົາໃຈໃສ່ຄົ້ນຄວ້າປະກອບຄຳເຫັນຢ່າງມີຈຸດສຸມ, ກົງໄປກົງມາ ໃສ່ບັນດາບົດລາຍງານ ແລະ ໜັງສະເໜີຕ່າງໆທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ເພື່ອຮັບປະກັນການຕົກລົງບັນຫາຢ່າງມີຄວາມເປັນເອກະພາບ, ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ນຳຜົນປະໂຫຍດລວມມາສູ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າຢ່າງແທ້ຈິງ.

**(ຂ່າວ: ສຸພາວັນ ທອມສະນິດ; ພາບ: ກຸກກົກ ບຸດດາໄຊ)**

---

## ສຳເລັດການເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝສາມັນເທື່ອທີ 5 ຢູ່ເມືອງດາກຈຶງ



(ສພຊ) ໃນລະຫວ່າງວັນທີ 25-27 ກັນຍາຜ່ານມາ, ສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ເຊກອງ ເຊິ່ງນຳໂດຍທ່ານ ນາງ ທັດສະດາພອນ ຈັນທະມາດ ຮອງປະທານກຳມາທິການບັນດາເຜົ່າສະພາແຫ່ງຊາດ ທັງເປັນ ສສຊ ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ, ມີທ່ານ ນາງ ໄຣມະນີ ວົງໜໍ່ແກ້ວ ສສຊ ປະຈຳເຂດເລືອກຕັ້ງ, ປະທານກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າສະພາປະຊາຊົນແຂວງ, ທ່ານ ເພັງນາ ຈັນທະພອນ ເລຂາພັກເມືອງ ເຈົ້າເມືອງດາກຈຶງ ທັງເປັນ ສສຂ ປະຈຳເຂດເລືອກຕັ້ງເມືອງດາກຈຶງ ພ້ອມດ້ວຍຄະນະ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງເຊກອງ ຊຸດທີ II ໃຫ້ແກ່ຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ສອງກຳລັງປະກອບອາວຸດ, ຫົວໜ້າຫ້ອງການ, ອົງການທຽບເທົ່າ ແລະ ພະນັກງານນຳພາຫຼັກແຫຼ່ງຂັ້ນເມືອງ ພ້ອມດ້ວຍພໍ່ແມ່ປະຊາຊົນບ້ານຊຽງຫຼວງ, ບ້ານມັງຫາ ແລະ ບ້ານພາຍໃນເທດສະບານເມືອງດາກຈຶງ.

ໃນໂອກາດນີ້, ທ່ານ ນາງ ທັດສະດາພອນ ຈັນທະມາດ ໃຫ້ຮູ້ວ່າ: ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງເຊກອງ ຊຸດທີ II ແມ່ນເຫດການການເມືອງທີ່ສຳຄັນທາງປະຫວັດສາດຂອງພັກເຮົາ, ເປັນກອງປະຊຸມສືບຕໍ່ຍຶດໝັ້ນ ແລະ ເພີ່ມເຕີມເສີມຂະຫຍາຍແນວທາງປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການຂອງພັກເຂົ້າສູ່ລວງເລິກ ແລະ ກຳນົດທັດສະນະແຫ່ງການສ້າງການຫັນປ່ຽນຢ່າງແຂງແຮງຕໍ່ການນຳພາ-ຊີ້ນຳປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມຕາມທີ່ພັກ-ລັດເຮົາວາງໄວ້; ໃນການເຜີຍແຜ່ຄັ້ງນີ້ກໍເພື່ອແນໃສ່ເຮັດໃຫ້ພະນັກງານນຳພາຫຼັກແຫຼ່ງ, ພະນັກງານນຳພາຄຸ້ມຄອງແຕ່ລະຂັ້ນ ພ້ອມດ້ວຍພໍ່ແມ່ປະຊາຊົນໃນທົ່ວເມືອງໄດ້ຮັບຮູ້ ເຂົ້າໃຈຢ່າງເລິກເຊິ່ງ ແລະ ກຳແໜ້ນເນື້ອໃນ ທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຈຳນວນ 10 ມະຕິ ແລະ ຂອງສະພາປະຊາຊົນແຂວງເຊກອງ ຊຸດທີ II ຈຳນວນ 12 ມະຕິ ໂດຍສະເພາະແມ່ນເນື້ອໃນສຳຄັນຕົ້ນຕໍ ແລະ ວຽກງານຈຸດສຸມທີ່ຕ້ອງເອົາໃຈໃສ່ນຳພາ-ຊີ້ນຳຢູ່ໃນແຕ່ລະຂົງເຂດວຽກງານຕາມຄວາມຮັບຜິດຊອບ, ຕິດພັນກັບການເສີມຂະຫຍາຍຄວາມເປັນເຈົ້າການໃນການນຳພາ-ຊີ້ນຳຈັດຕັ້ງປະຕິບັດໃຫ້ເປັນແຜນງານ, ເປັນໂຄງການ ແລະ ກິດຈະກຳລະອຽດໃນແຕ່ລະຂະແໜງການ ແລະ ອົງການປົກຄອງບ້ານຂອງຕົນ, ເພື່ອຈັດຕັ້ງປະຕິບັດໃຫ້ເກີດດອກອອກຜົນຕົວຈິງ, ສ້າງໄດ້ຜົນສຳເລັດໃໝ່ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ກໍຄືເມືອງດາກຈຶງ ແຂວງເຊກອງ; ກອງປະຊຸມຍັງໄດ້ຮັບຟັງການລາຍງານສະພາບລວມການນຳພາ-ຊີ້ນຳວຽກງານຮອບດ້ານຂອງອົງການປົກຄອງບ້ານ, ເຂດຈຸດສຸມພັດທະນາ ແລະ ຮັບຟັງຂໍ້ຄິດເຫັນ, ຂໍ້ສະເໜີຈາກພໍ່ແມ່ປະຊາຊົນ.

ຈາກນັ້ນ, ທ່ານ ນາງ ທັດສະດາພອນ ຈັນທະມາດ ພ້ອມດ້ວຍຄະນະ ໄດ້ລົງຕິດຕາມ, ຊຸກຍູ້ ແລະ ຮັບຟັງລາຍງານຄວາມຄືບໜ້າໃນການປະຕິບັດວຽກງານຂອງບັນດາໂຄງການລົງທຶນໃນເມືອງດາກຈຶງ ເຊັ່ນ: ໂຄງການເຂື່ອນໄຟຟ້ານ້ຳອີ່ມູນ, ໂຄງການອຸດສາຫະກຳບົກຊິດ-ອາລູມີນາ ແລະ ໂຄງການໄຟຟ້າພະລັງງານລົມ ມອນຊູນວິນ 600 ເມກາວັດ.

(ພຸດທະໄຊ ຍົວມະນີ)

---

## ເລື່ອງ ເດັ່ນ ຂ່າວ ເດັດ

*# ຄັດໂດຍ: ທອມສະນິດ*

*❐ ບົດລາຍງານການຄາດຄະເນການພັດທະນາຂອງອາຊີ ສະບັບເດືອນກັນຍາ 2023 ເຊິ່ງເປັນບົດລາຍງານສະບັບປັບປຸງຂອງທະນາຄານພັດທະນາອາຊີ ຫຼື ເອດີບີ (ADB) ໄດ້ຫຼຸດອັດຕາການຄາດຄະເນການເຕີບໂຕດ້ານເສດຖະກິດ ຂອງ ສປປ ລາວ ໃນປີ 2023 ລົງມາທີ່ 3,7% ຈາກອັດຕາທີ່ໄດ້ຄາດຄະເນໄວ້ກ່ອນໜ້ານີ້ທີ່ 4,0%. ສ່ວນການຄາດຄະເນອັດຕາການເຕີບໂຕຂອງປີ 2024 ແມ່ນຍັງຮັກສາໄວ້ຢູ່ທີ່ 4,0%, ຄາດວ່າອັດຕາເງິນເຟີ້ຍັງຈະຢູ່ໃນລະດັບສູງຈົນຮອດທ້າຍປີນີ້ເຊິ່ງຈະເຮັດໃຫ້ອັດຕາເງິນເຟີ້ສະເລ່ຍເພີ່ມຂຶ້ນເຖິງ 28%, ການປັບລາຄາທີ່ຕິດພັນກັບການອ່ອນຄ່າຂອງເງິນກີບ ຈະຍັງຮັກສາອັດຕາເງິນເຟີ້ສູງໃນປີ 2024 ໃນອັດຕາ 10%.*

***ໜສພ. ປະເທດລາວ 22/09/2023***

*❐ ມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ 6 ເດືອນຕົ້ນປີ 2023 ປະຕິບັດໄດ້ 6.978,3 ຕື້ກີບ ບັນລຸ 49,7% ຂອງແຜນການປີທີ່ວາງໄວ້ ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເຫັນວ່າມີອັດຕາເພີ່ມຂຶ້ນ 4,41% ມູນຄ່າການຈໍລະຈອນສິນຄ້າພາຍໃນ 6 ເດືອນຕົ້ນປີ 2023 ປະຕິບັດໄດ້ 37.632,9 ຕື້ກີບ ບັນລຸ 51,1% ຂອງແຜນການປີທີ່ວາງໄວ້ ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເຫັນວ່າມີອັດຕາເພີ່ມຂຶ້ນ 3,4% ມູນຄ່າການຄ້າຕ່າງປະເທດ 6 ເດືອນຕົ້ນປີ 2013ປະຕິບັດໄດ້7.546ລ້ານໂດລາສະຫະລັດ; ໃນນີ້, ມູນຄ່າສົ່ງອອກ 4.272 ລ້ານໂດລາສະຫະລັດ ປະຕິບັດໄດ້ 51,9% ຂອງແຜນການປີທີ່ວາງໄວ້ ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເຫັນວ່າມີອັດຕາເພີ່ມຂຶ້ນ 2,4% ສຳລັບມູນຄ່ານຳເຂົ້າສິນຄ້າ 3.274 ລ້ານໂດລາສະຫະລັດ ປະຕິບັດໄດ້ 46,1% ຂອງແຜນການປີທີ່ວາງໄວ້ ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເຫັນວ່າມີອັດຕາເພີ່ມຂຶ້ນ 5,2%.*

***ໜສພ. ວຽງຈັນໃໝ່ 22/09/2023***

*❐ ນັບແຕ່ເດືອນມັງກອນ ຮອດວັນທີ 17 ກັນຍາ 2023, ລົດໄຟ ລາວ-ຈີນ ສາມາດຂົນສົ່ງສິນຄ້າບັນລຸ 3.101.400 ໂຕນ; ໃນນັ້ນ, ສິນຄ້າຕົ້ນຕໍ ປະກອບມີ: ໝາກໄມ້, ແປ້ງມັນຕົ້ນ, ເຂົ້າບາເລ, ຢາງພາລາ, ເບຍ, ແຮ່ເຫຼັກ, ຫີນຢົກ ແລະ ປຸຍເຄມີ; ສິນຄ້າທີ່ສົ່ງຈາກ ສປ ຈີນ ມາ ສປປ ລາວ ມີ 344.700 ໂຕນ ແລະ ສິນຄ້າທີ່ສົ່ງຈາກລາວ ໄປ ສປ ຈີນ 2.752.200 ລ້ານໂຕນ. ສຳລັບການຂົນສົ່ງຜູ້ໂດຍສານ ນັບແຕ່ມື້ເປີດດຳເນີນການທາງລົດໄຟ ມາຮອດວັນທີ 17 ກັນຍາ 2023 ໄດ້ຂົນສົ່ງຜູ້ໂດຍສານໄດ້ທັງໝົດ 3.197.000 ຄົນ, ສະເລ່ຍ 4.889 ຄົນ/ມື້ ແລະ ສະຖິຕິສູງສຸດ 10.197ຄົນ/ມື້ ສະເພາະປີ 2023 ມາຮອດວັນທີ 17 ກັນຍາຂົນສົ່ງຜູ້ໂດຍສານໄດ້ 1.759.900 ເທື່ອຄົນ ທຽບໃສ່ໄລຍະດຽວກັນຂອງປີ 2022 ເພີ່ມຂຶ້ນ 103,7%, ຂົນສົ່ງໂດຍສານສະເລ່ຍ 6.768 ຄົນ/ມື້.*

***ໜສພ. ປະເທດລາວ 25/09/2023***

## ຄົ້ນຄວ້າ...

(ຕໍ່ຈາກໜ້າ 1)

ແລະ ສະພາປະຊາຊົນຂັ້ນແຂວງ ໃນການເຄື່ອນໄຫວປະຕິບັດໜ້າທີ່ການເມືອງຂອງຕົນດີຂຶ້ນ, ການປັບປຸງໄລຍະຜ່ານມາ ກໍ່ມີອັນບໍ່ທັນສອດຄ່ອງກັບຂັ້ນຕອນຂອງກົດໝາຍວ່າດ້ວຍການສ້າງນິຕິກຳ ໂດຍສະເພາະຂັ້ນຕອນການປະເມີນການຈັດຕັ້ງປະຕິບັດ ແລະ ທາບທາມກົດໝາຍບໍ່ທັນເຮັດຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຕາມຂັ້ນຕອນທີ່ກຳນົດໃນກົດໝາຍ. ຈຶ່ງຍັງມີບາງເນື້ອໃນບໍ່ທັນຮັດກຸມ, ຊັດເຈນ, ຄົບຖ້ວນ ແລະ ຈະແຈ້ງ ເຮັດໃຫ້ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງໃນບາງດ້ານບໍ່ທັນມີຄຸນນະພາບສູງເທົ່າທີ່ຄວນ.



ໃນວາລະກອງປະຊຸມ, ທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ ສະພາແຫ່ງຊາດ ໄດ້ຂຶ້ນຜ່ານບົດສະເໜີການປັບປຸງກ່ຽວກັບກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ໂດຍໄດ້ຍົກໃຫ້ເຫັນສະພາບການຈັດຕັ້ງປະຕິບັດໄລຍະຜ່ານມາ, ເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງກົດໝາຍ, ຂະບວນການຄົ້ນຄວ້າປັບປຸງກົດໝາຍ, ໂຄງປະກອບ ແລະ ເນື້ອໃນສຳຄັນຂອງຮ່າງກົດໝາຍ ແລະ ອື່ນໆ; ຈາກນັ້ນ, ຄະນະຮັບຜິດຊອບປັບປຸງກົດໝາຍ ແລະ ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນຄົ້ນຄວ້າ, ປະກອບຄຳເຫັນ ແລະ ເປັນເອກະພາບກັນໃສ່ຮ່າງກົດໝາຍວ່າດ້ວຍການຕິດຕາມກວດກາສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ຢ່າງກົງໄປກົງມາ ເຊິ່ງປະກອບມີ VIII ພາກ, 10 ໝວດ ແລະ 108 ມາດຕາ (ເພີ່ມ 7 ມາດຕາ, ປັບປຸງ 23 ມາດຕາ, ຕັດອອກ 5 ມາດຕາ ແລະ ຍັງຮັກສາຄືເກົ່າ 78 ມາດຕາ) ເພື່ອເຮັດໃຫ້ເນື້ອໃນຂອງກົດໝາຍດັ່ງກ່າວຄົບຖ້ວນ ແລະ ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍອື່ນທີ່ປະກາດໃຊ້ແລ້ວ, ສົນທິສັນຍາ, ສັນຍາສາກົນທີ່ກ່ຽວຂ້ອງ ແລະ ການຈັດຕັ້ງປະຕິບັດຕົວຈິງ.

## ກອດກາ...

(ຕໍ່ຈາກໜ້າ 1)

ແລະ ການລົງທຶນ, ບັນດາທ່ານຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ, ຄະນະກົມ, ຄະນະພະແນກ ແລະ ວິຊາການທີ່ກ່ຽວຂ້ອງຈາກສະພາແຫ່ງຊາດ, ຫ້ອງວ່າການສຳນັກງານປະທານປະເທດ, ກະຊວງຍຸຕິທຳ, ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງແຮງງານ ແລະ ສິດທິພາບເທົ່າທີ່ຄວນ; ສະນັ້ນ, ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການຂະຫຍາຍຕົວເສດຖະກິດ-ສັງຄົມຂອງພາກພື້ນ ແລະ ສາກົນ ໃນໄລຍະໃໝ່ ເວົ້າລວມ ການພັດທະນາເຂດເສດຖະກິດພິເສດຢູ່ ສປປ ລາວ ເວົ້າສະເພາະ ສາມາດຕອບສະໜອງ ແລະ ເພີ່ມຂີດຄວາມສາມາດໃນການຍາດແຍ່ງແຂ່ງຂັນດ້ານການດຶງດູດການລົງທຶນໃຫ້ນັບມື້ນັບເພີ່ມຂຶ້ນ. ຈຶ່ງມີຄວາມຈຳເປັນຕ້ອງໄດ້ຍົກລະດັບບັນດານິຕິກຳທີ່ມີແລ້ວກັບການສ້າງ ແລະ ປັບປຸງກົດໝາຍ, ປະກອບຄຳເຫັນ ແລະ ເປັນເອກະພາບກັນໃສ່ຮ່າງກົດໝາຍວ່າດ້ວຍເຂດເສດຖະກິດພິເສດ (ສ້າງໃໝ່) ຢ່າງກົງໄປກົງມາ ເຊິ່ງປະກອບມີ XII ພາກ, 16 ໝວດ ແລະ 90 ມາດຕາ ເພື່ອເຮັດໃຫ້ເນື້ອໃນຂອງກົດໝາຍດັ່ງກ່າວ ຄົບຖ້ວນ ແລະ ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍອື່ນທີ່ປະກາດໃຊ້ແລ້ວ, ສົນທິສັນຍາ, ສັນຍາສາກົນທີ່ກ່ຽວຂ້ອງ ແລະ ການຈັດຕັ້ງປະຕິບັດຕົວຈິງ ກ່ອນນຳສະເໜີກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນາກ່ອນນຳເຂົ້າກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX.



ສະຫວັດດີການສັງຄົມ, ທະນາຄານ ແຫ່ງ ສປປ ລາວ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ໃນວາລະຂອງກອງປະຊຸມ, ທ່ານ ນາງ ຄຳຈັນ ວົງແສນບຸນ ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ໄດ້ຜ່ານບົດສະເໜີກ່ຽວກັບການປັບປຸງກົດໝາຍວ່າດ້ວຍເຂດເສດຖະກິດພິເສດ (ສ້າງໃໝ່) ໂດຍໄດ້ຍົກໃຫ້ເຫັນເຫດຜົນ ແລະ ຄວາມຈຳເປັນຂອງການຈັດຕັ້ງປະຕິບັດວຽກງານພັດທະນາ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ໃນໄລຍະຜ່ານມາເຖິງວ່າຈະມີນິຕິກຳຈຳນວນໜຶ່ງທີ່ເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແຕ່ນິຕິກຳເຫຼົ່ານັ້ນເປັນພຽງນິຕິກຳລຸ່ມກົດໝາຍເທົ່ານັ້ນ ຈຶ່ງເຮັດໃຫ້ການໃຫ້ນະໂຍບາຍສົ່ງເສີມ, ກົນໄກການຄຸ້ມຄອງ ແລະ ການປະຕິບັດຕົວຈິງຂອງວຽກງານພັດທະນາ ແລະ ຄຸ້ມຄອງເຂດເສດຖະກິດພິເສດຍັງບໍ່ທັນມີປະໃຫ້ເປັນກົດໝາຍ ໂດຍຮັບປະກັນມີຄວາມໜັກແໜ້ນ, ຮັດກຸມ, ຈະແຈ້ງ, ຄົບຖ້ວນ ພ້ອມທັງເຮັດໃຫ້ການພັດທະນາ ແລະ ການລົງທຶນໃນເຂດເສດຖະກິດພິເສດ ສປປ ລາວ ມີຄວາມໃກ້ຄຽງກັບພາກພື້ນ, ສາກົນ ແລະ ສາມາດແຂ່ງຂັນໄດ້; ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ພັດທະນາ ແລະ ຜູ້ລົງທຶນຈາກພາຍໃນ ແລະ ຕ່າງປະເທດ ໃນການລົງທຶນພັດທະນາເຂດເສດຖະກິດພິເສດ.

ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມ ໄດ້ພ້ອມກັນສຸມໃສ່ຄົ້ນຄວ້າຢ່າງມີຈຸດສຸມ ແລະ ກົງໄປກົງມາຕໍ່ກັບເນື້ອໃນຂອງຮ່າງກົດໝາຍສະບັບດັ່ງກ່າວ ເຮັດໃຫ້ຮ່າງກົດໝາຍມີຄວາມຮັດກຸມ, ຈະແຈ້ງ, ສອດຄ່ອງກັບແນວທາງນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍອື່ນ, ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ແລະ ແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ; ທັງເພື່ອເປັນການລະດົມສະຕິປັນຍາຈາກພາກສ່ວນທີ່ກ່ຽວຂ້ອງ

ໃນຕອນທ້າຍຂອງກອງປະຊຸມ, ທ່ານ ສົມມາດ ພົລເສນາ ໄດ້ມີຄຳເຫັນວ່າ: ເປັນເວລາ 2 ວັນເຕັມ ທີ່ກອງປະຊຸມກອດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍວ່າດ້ວຍເຂດເສດຖະກິດພິເສດ ໄດ້ດຳເນີນຢ່າງເປັນຂະບວນຟົດຟື້ນ, ກົງໄປກົງມາ ແລະ ດ້ວຍຄວາມຮັບຜິດຊອບສູງ ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ, ປະກອບຄຳເຫັນໃສ່ເນື້ອໃນຂອງຮ່າງກົດໝາຍ ແນໃສ່ເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍວ່າດ້ວຍເຂດເສດຖະກິດພິເສດ ມີຄວາມຄົບຖ້ວນ, ຈະແຈ້ງ ແລະ ຮັດກຸມ ແລະ ສາມາດນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄຂຂຶ້ນໃນທ້າຍເດືອນຕຸລາ 2023.

**(ນາງ ອານິຕາ ມ່ອນສະຫວັດ)**

## ກອງເລຂາແຫຼ່ງທຶນຊ່ວຍເຫຼືອລ້າ ສພຊ ເກັບກຳຂໍ້ມູນກ່ຽວກັບລະບົບຂໍ້ມູນ-ຂ່າວສານ ຢູ່ແຂວງອັດຕະປື




(ສພຊ) ວັນທີ 28 ກັນຍາ 2023 ທີ່ສະພາປະຊາຊົນແຂວງອັດຕະປື, ກອງເລຂາແຫຼ່ງທຶນຊ່ວຍເຫຼືອລ້າ ສະພາແຫ່ງຊາດ (ສພຊ) ຢ້ຽມຢາມ ແລະ ສຳພາດເກັບກຳຂໍ້ມູນ ກ່ຽວກັບລະບົບຂໍ້ມູນ-ຂ່າວສານ ນຳໂດຍ ທ່ານ ວິລະພົນ ສະຫວັດວົງ ຮອງຫົວໜ້າຫ້ອງການຄຸ້ມຄອງທຳສະພາແຫ່ງຊາດ ຜູ້ຊີ້ນຳວຽກງານໄອທີ; ມີທ່ານ ຊໍ ມິນ ເທັດ ຮັກສາການຜູ້ຈັດການໂຄງການ STEPS ພ້ອມດ້ວຍຄະນະ ໂດຍໄດ້ຮ່ວມເຮັດວຽກກັບຄະນະເລຂາທິການ, ຫົວໜ້າຂະແໜງ-ຮອງຂະແໜງ ແລະ ວິຊາການທີ່ຮັບຜິດຊອບຂໍ້ມູນ-ຂ່າວສານ ແລະ ໄອທີ ຂອງສະພາປະຊາຊົນແຂວງອັດຕະປື.

ໂອກາດນີ້, ທ່ານ ວິລະພົນ ສະຫວັດວົງ ໄດ້ກ່າວຈຸດປະສົງວ່າ: ແມ່ນເປັນການສືບຕໍ່ຕາມຂັ້ນຕອນການເກັບກຳຂໍ້ມູນການປະເມີນຄວາມອາດສາມາດດ້ານໄອຊີທີຂອງສະພາປະຊາຊົນຂັ້ນແຂວງ 18 ແຂວງໃນທົ່ວປະເທດ. ໂດຍຜ່ານການເກັບກຳຂໍ້ມູນໃນເບື້ອງຕົ້ນຜ່ານການຕອບແບບສອບຖາມ ຈາກ 18 ແຂວງແລ້ວ ທີມງານຜູ້ຊ່ຽວຊານດ້ານໄອຊີທີ ໄດ້ສັງລວມຂໍ້ມູນ ແລະ ຈັດປະເພດຄວາມພ້ອມດ້ານລະບົບໄອຊີທີຂອງແຕ່ລະສະພາປະຊາຊົນແຂວງ ໂດຍສາມາດຈັດເປັນ3ປະເພດ ຄື: ຄວາມພ້ອມດ້ານໄອຊີທີໜ້ອຍ, ກາງ ແລະ ຫຼາຍ ໂດຍແຕ່ລະປະເພດ ປະກອບມີ 6 ແຂວງ ເຊິ່ງສະພາປະຊາຊົນແຂວງອັດຕະປື ແມ່ນຈັດຢູ່ໜຶ່ງໃນບັນດາແຂວງທີ່ມີຄວາມພ້ອມໜ້ອຍ, ຜົນຂອງການຈັດປະເພດຕາມຜົນການຕອບແບບສອບຖາມນັ້ນ ແມ່ນຍັງບໍ່ທັນເປັນອັນຕັດສິນ, ຊັດເຈນ ແລະ ເປັນບ່ອນອີງໄດ້ເທື່ອ. ສະນັ້ນ, ການມາເກັບກຳຂໍ້ມູນຈາກສະພາປະຊາຊົນແຂວງ ໂດຍເລືອກເອົາ 4 ແຂວງ ເພື່ອເປັນກຸ່ມຕົວຢ່າງ ແລະ ເປັນຕົວແທນໃຫ້ແກ່ແຕ່ລະປະເພດຄວາມພ້ອມດ້ານລະບົບໄອຊີທີ ແລະ ສິ່ງອຳນວຍຄວາມສະດວກດ້ານໄອທີ. ໃນນັ້ນ, ປະເພດຄວາມພ້ອມຫຼາຍ ເລືອກເອົາສະພາປະຊາຊົນນະຄອນຫຼວງວຽງຈັນ, ປະເພດກາງ ເລືອກເອົາສະພາປະຊາຊົນແຂວງອຸດົມໄຊ ແລະ ປະເພດໜ້ອຍ ແມ່ນເລືອກເອົາ 2 ຈຸດ ຄື: ສະພາປະຊາຊົນແຂວງຫຼວງພະບາງ ແລະ ອັດຕະປື.

ຈາກນັ້ນ, ທ່ານ ນາງ ແສງອາລຸນ ວົງສາທິການ ເລຂາທິການສະພາປະຊາຊົນແຂວງ ໄດ້ລາຍງານສະພາບລວມໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດວຽກງານລະບົບຂໍ້ມູນ-ຂ່າວສານ ແລະ ໄອທີ ໃຫ້ຊາບວ່າ: ການຫັນເປັນທັນສະໄໝ ແມ່ນວຽກໜຶ່ງທີ່ມີຄວາມສຳຄັນຫຼາຍ ແມ່ນການນຳໃຊ້ເຕັກໂນໂລຊີ (ICT) ຫຼື ໃນປັດຈຸບັນເອີ້ນກັນວ່າ ດີຈິຕອນ (Digital) ເຂົ້າເປັນກົນໄກ, ປະສານງານ, ຊຸກຍູ້ສົ່ງເສີມ ແລະ ເປັນເຄື່ອງມືອັນສຳຄັນໃນການຂັບເຄື່ອນການປະຕິຮູບຂະບວນການບໍລິຫານໃຫ້ແກ່ການຈັດຕັ້ງປະຕິບັດວຽກງານຂອງສະພາປະຊາຊົນຂັ້ນແຂວງ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ມີປະສິດທິພາບດີຂຶ້ນເປັນກ້າວໆ, ຕະຫຼອດໄລຍະຜ່ານມາ ການຈັດຕັ້ງປະຕິບັດວຽກງານໄອທີ ໃນການເປັນເສນາທິການໃຫ້ແກ່ສະພາປະຊາຊົນຂັ້ນແຂວງ ໄດ້ເອົາໃຈໃສ່ປະຕິບັດປະສານງານ ແລະ ອຳນວຍຄວາມສະດວກຫຼາຍດ້ານ ເປັນຕົ້ນ: ການນຳໃຊ້ອິນເຕີເນັດ, ລະບົບກອງປະຊຸມທາງໄກ, ການຈັບເວລາປະກອບຄຳເຫັນຜ່ານລະບົບອອນລາຍວີໂອກ (v-clock) ໃນກອງປະຊຸມສະໄໝສາມັນ, ລະບົບເຄື່ອງລົງຄະແນນສຽງຮັບຮອງມະຕິໃນກອງປະຊຸມສະໄໝສາມັນ, ການກະຈາຍຂ່າວສານການເຄື່ອນໄຫວ ສສຊ-ສສຂ ຜ່ານສື່ອອນລາຍ ເຟສບຸກ (Face book), ແອັບພິເຄຊັນ ລາວນາຂອງສະພາແຫ່ງຊາດ, ການຈັດລາຍການວິທະຍຸ, ການປະສານງານ ແລະ ການເຂົ້າເຖິງຂໍ້ມູນ-ຂ່າວສານ ຜ່ານລະບົບ ອີເມວ (Email), ວັອດແອັບ (what app), ຈີແຊັດ (G-Chat), ກູໂກດຣາຍ (Google drive), ຄິວອາໂຄດ (QR code) ແລະ ອື່ນໆ.

ພ້ອມນັ້ນ, ໄດ້ສົນທະນາແລກປ່ຽນເຊິ່ງກັນ ແລະ ກັນ ແລະ ເຂົ້າຢ້ຽມຊົມບັນດາສິ່ງອຳນວຍຄວາມສະດວກ ເປັນຕົ້ນ ເຄື່ອງມືດ້ານໄອຊີທີ, ຫໍສະໝຸດ ແລະ ຫ້ອງເຮັດວຽກຂອງສະພາປະຊາຊົນແຂວງ ເພື່ອເກັບກຳໄດ້ສະພາບຕົວຈິງ ທັງເປັນຂໍ້ມູນໃນການເຮັດບົດລາຍງານການປະເມີນ ແລະ ຍັງຈະສ້າງແຜນຍຸດທະສາດດ້ານໄອຊີທີ ເພື່ອເປັນບ່ອນອີງໃນການສະໜັບສະໜູນໃນກອບຂອງໂຄງ.

**(ວິນັດ)**

## ຄະນະມິດຕະພາບ...

(ຕໍ່ຈາກໜ້າ 1)




ວຽກ ຢູ່ ສປປ ລາວ ໃນລະຫວ່າງ ວັນທີ 17-23 ກັນຍາ 2023 ຕາມການເຊື້ອເຊີນຂອງ ທ່ານ ວຽງວິໄລ ທ່ຽງຈັນໄຊ ສະມາຊິກສະພາແຫ່ງຊາດ, ປະທານ ຄະນະມິດຕະພາບລັດຖະສະພາ ລາວ-ຝຣັ່ງ, ສະພາແຫ່ງຊາດ ແຫ່ງ ສປປ ລາວ.

ວັນທີ 18 ກັນຍາ 2023, ຄະນະມິດຕະພາບລັດຖະສະພາ ລາວ-ຝຣັ່ງ ແລະ ຝຣັ່ງ-ລາວ ໄດ້ພົບປະເຮັດວຽກຮ່ວມກັນ ໂດຍໄດ້ແລກປ່ຽນສະພາບການພົ້ນເດັ່ນຂອງແຕ່ລະປະເທດ, ສະພາບການເຄື່ອນໄຫວວຽກງານຂອງສອງອົງການນິຕິບັນຍັດ ກໍຄືສອງຄະນະມິດຕະພາບລັດຖະສະພາ, ຮ່ວມກັນຕີລາຄາຄືນການພົວພັນຮ່ວມມື ລະຫວ່າງ ສອງປະເທດ, ສອງອົງການນິຕິບັນຍັດ ກໍຄືສອງຄະນະມິດຕະພາບ ແລະ ປຶກສາຫາລືທິດທາງແຜນ ການພົວພັນຮ່ວມມືໃນຕໍ່ໜ້າ. ໃນນາມເປັນກົນໄກໜຶ່ງ ໃນການຊຸກຍູ້ ແລະ ສົ່ງເສີມການພົວພັນຮ່ວມມືລະຫວ່າງ ສອງອົງການນິຕິບັນຍັດຂອງສອງປະເທດ, ສອງຝ່າຍໄດ້ເຫັນດີເປັນເອກະພາບສືບຕໍ່ແລກປ່ຽນຄະນະຜູ້ແທນຂັ້ນຕ່າງໆນຳກັນ, ແລກປ່ຽນຂໍ້ມູນ-ຂ່າວສານ, ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ໃນການຈັດຕັ້ງປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ; ສືບຕໍ່ຊຸກຍູ້ ແລະ ສົ່ງເສີມການພົວພັນຮ່ວມມືລະຫວ່າງບັນດາຂະແໜງການຕ່າງໆຂອງສອງປະເທດ ກໍຄືການຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນ ໃນການເຄື່ອນໄຫວຢູ່ເວທີລັດຖະສະພາພາກພື້ນ ແລະ ສາກົນ. ຄະນະມິດຕະພາບລັດຖະສະພາ ຝຣັ່ງ-ລາວ ຍິນດີຈະໃຫ້ການຊ່ວຍເຫຼືອໃນການພັດທະນາຊັບພະຍາກອນມະນຸດ ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຂອງລາວ ແລະ ສະໜັບສະໜູນສະພາແຫ່ງຊາດລາວໃນການເປັນເຈົ້າພາບຈັດກອງປະຊຸມໃຫຍ່ສະມັດຊາລັດຖະສະພາ ລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ໃນປີ 2024 ທີ່ຈະມາເຖິງ.

ໃນການຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ໃນຄັ້ງນີ້, ຄະນະມິດຕະພາບລັດຖະສະພາ ຝຣັ່ງ-ລາວ ຂອງສະພາແຫ່ງຊາດ ຝຣັ່ງ ຍັງໄດ້ເຂົ້າຢ້ຽມຂໍ່ານັບທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດລາວ ເຊິ່ງທ່ານໄດ້ຕີລາຄາສູງຕໍ່ສາຍພົວພັນຮ່ວມມືລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດ ລາວ-ຝຣັ່ງ ແລະ ຕີລາຄາສູງຕໍ່ຜົນການພົບປະເຮັດວຽກລະຫວ່າງສອງຄະນະມິດຕະພາບລັດຖະສະພາ ຫວັງວ່າຄະນະມິດຕະພາບລັດຖະສະພາສອງປະເທດ ຈະສືບຕໍ່ແລກປ່ຽນຄະນະຜູ້ແທນໄປມາຫາສູ່ກັນໄດ້ຫຼາຍຂຶ້ນ ເພື່ອແລກປ່ຽນບົດຮຽນ ແລະ ປະສົບການ ໃນການປະຕິບັດພາລະບົດບາດຂອງອົງການນິຕິບັນຍັດໃຫ້ມີປະສິດທິຜົນ ນຳເອົາຜົນປະໂຫຍດຢ່າງແທ້ຈິງມາສູ່ປະຊາຊົນ.

ນອກນັ້ນ, ຄະນະຜູ້ແທນຄະນະມິດຕະພາບລັດຖະສະພາຝຣັ່ງ-ລາວ ຍັງໄດ້ພົບປະເຮັດວຽກກັບບັນດາພາກສ່ວນທີ່ກ່ຽວຂ້ອງຂອງລາວເຊັ່ນ: ກະຊວງສຶກສາທິການ ແລະ ກິລາ, ກະຊວງແຜນການ ແລະ ການລົງທຶນ ແລະ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ເດີນທາງດ້ວຍລົດໄຟດ່ວນ ລາວ-ຈີນ ໄປຢ້ຽມຢາມແຂວງຫຼວງພະບາງ ເມືອງມໍລະດົກໂລກ, ຄະນະໄດ້ພົບປະເຮັດວຽກກັບ ທ່ານ ວົງສະຫວັນ ເທບພະຈັນ ປະທານສະພາປະຊາຊົນ ແຂວງຫຼວງພະບາງ ແລະ ເຂົ້າຢ້ຽມຂໍ່ານັບ ທ່ານ ຄຳຂັນ ຈັນທະວິສຸກ ກຳມະການສູນກາງພັກ, ເຈົ້າແຂວງຫຼວງພະບາງ, ຢ້ຽມຊົມພື້ນຖານເສດຖະກິດ, ວັດທະນະທຳ ແລະ ແຫຼ່ງທ່ອງທ່ຽວຈຳນວນໜຶ່ງຂອງແຂວງຫຼວງພະບາງ.

## ສສຊ ແລະ ສສຂ...

(ຕໍ່ຈາກໜ້າ 1)

ແຂວງ. ໃນວັນທີ 20 ກັນຍາ 2023 ຢູ່ຫ້ອງປະຊຸມຊັ້ນ III ຫ້ອງວ່າການເມືອງວຽງທອງ ແຂວງບໍລິຄຳໄຊ, ສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງບໍລິຄຳໄຊ ຊຸດທີ II ໂດຍການເປັນປະທານຂອງທ່ານນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ເລຂາທິການສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 11, ມີບັນດາທ່ານ ສສຂ, ຄະນະປະຈຳພັກເມືອງ, ຫົວໜ້າ, ຮອງຫົວໜ້າຫ້ອງການ, ຕະຫຼອດຮອດພະນັກງານວິຊາການພາຍໃນເມືອງເຂົ້າຮ່ວມຮັບຟັງ.

ໃນໂອກາດດັ່ງກ່າວ, ທ່ານ ພັອ. ຄຳແພນ ວິລີ້ທຳ ເຈົ້າເມືອງວຽງທອງ ໄດ້ໃຫ້ກຽດກ່າວຕ້ອນຮັບ ແລະ ລາຍງານສະພາບລວມໂດຍຫຍໍ້ພາຍໃນເມືອງໃຫ້ໄດ້ຮັບຊາບ; ຫຼັງຈາກນັ້ນ, ຄະນະທີມງານຈາກສະພາກໍໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ວ່າ: ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງຫຼາຍບັນຫາສຳຄັນພື້ນຖານຂອງຊາດ ແລະ ຂອງແຂວງບໍລິຄຳໄຊ ເພື່ອໃຫ້ພະນັກງານ-ລັດຖະກອນ ຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ. ຄຽງຄູ່ກັບການພົບປະແລກປ່ຽນ, ຮັບຟັງການລາຍງານ ແລະ ປະກອບກອບຄຳຄິດເຫັນ, ຄຳສະເໜີຂອງການນຳ ແລະ ພະນັກງານລັດຖະກອນ ເຊິ່ງໄດ້ມີການສະເໜີຫຼາຍບັນຫາທີ່ພົວພັນເຖິງການຄຸ້ມຄອງບໍລິຫານລັດ, ການພັດທະນາເສດຖະກິດ-ສັງຄົມ, ການພັດທະນາທີ່ມີຜົນກະທົບຕໍ່ສັງຄົມ, ສິ່ງແວດລ້ອມ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ຕໍ່ກັບຄຳສະເໜີດັ່ງກ່າວ ບັນດາ ສສຊ ແລະ ສສຂ ໄດ້ຜັດປ່ຽນກັນຊີ້ແຈງອະທິບາຍຕໍ່ບາງບັນຫາຄຳສະເໜີໃຫ້ເຂົ້າໃຈ ສ່ວນຄຳສະເໜີພົວພັນກັບຂະແໜງການຂອງພາກລັດ ແລະ ເອກະຊົນ ກອງເລຂາກອງປະຊຸມໄດ້ບັນທຶກສັງລວມ ເພື່ອນຳໄປລາຍງານຕໍ່ຄະນະປະຈຳສະພາປະຊາຊົນແຂວງ ກໍຄືຄະນະປະຈຳສະພາແຫ່ງຊາດ ຄົ້ນຄວ້າພິຈາລະນາ, ປະສານສົມທົບຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂໃຫ້ຖືກຕ້ອງສອດຄ່ອງຕາມລະບຽບກົດໝາຍ.

**(ທອງວັນດີ)**

## ປະທານກຳມາທິການ...

(ຕໍ່ຈາກໜ້າ 1)

ບັນດາເຜົ່າ ສະພາແຫ່ງຊາດ ແຫ່ງ ສປປ ລາວ ພ້ອມດ້ວຍຄະນະ ໄດ້ເດີນທາງຢ້ຽມຢາມ ແລະ ເຮັດວຽກ ຢູ່ ສສ.ຫວຽດນາມ ຕາມການເຊື້ອເຊີນຂອງປະທານສະພາຊົນຊາດ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ໃນວັນທີ 21 ກັນຍາ 2023 ຄະນະຜູ້ແທນໄດ້ພົບປະສອງຝ່າຍກັບສະຫາຍ ອີ ແທັງ ຮ່ານຽກ ເກິດຳ ກຳມະການສູນກາງພັກກອມມູນິດຫວຽດນາມ, ປະທານສະພາຊົນຊາດ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ພ້ອມດ້ວຍຄະນະ ທີ່ສະພາແຫ່ງຊາດ ສສ.ຫວຽດນາມ. ໃນການພົບປະຄັ້ງນີ້, ສະຫາຍປະທານກຳມາທິການ ໄດ້ມີຄຳເຫັນວ່າ: ການຢ້ຽມຢາມ ແລະ ເຮັດວຽກ ຢູ່ ສສ.ຫວຽດນາມ ແມ່ນເປັນການສືບຕໍ່ຜົນການຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ ຂອງສະຫາຍປະທານສະພາຊົນຊາດສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ແລະ ຄະນະ ໃນເດືອນກຸມພາ 2023 ຜ່ານມາ ທັງເປັນການປະຕິບັດບົດບັນທຶກການຮ່ວມມື ລະຫວ່າງ ສອງກຳມາທິການບັນດາເຜົ່າ ສະພາແຫ່ງຊາດ ແຫ່ງ ສປປ ລາວ ກັບ ສະພາຊົນຊາດ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ໃນການແລກປ່ຽນບົດຮຽນ ເຊິ່ງກັນ ແລະ ກັນ. ພ້ອມນີ້ ຍັງເປັນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ເວົ້າລວມ, ເວົ້າສະເພາະ ລະຫວ່າງສອງອົງການຂອງສະພາແຫ່ງຊາດລາວແລະສະພາແຫ່ງຊາດຫວຽດນາມ ໃຫ້ນັບມື້ນັບກ້າວເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳຂຶ້ນເທື່ອລະກ້າວ. ສຳລັບວຽກທີ່ສົນທະນາ ແລະ ແລກປ່ຽນຮ່ວມກັນ ແມ່ນລົງເລິກກ່ຽວກັບວຽກງານຊົນເຜົ່າ ແລະ ວຽກງານພັດທະນາຊົນນະບົດແກ້ໄຂຄວາມທຸກຍາກ, ຜ່ານການຄົ້ນຄວ້າ ແມ່ນມີບັນຍາກາດດີ, ບັນດາສະຫາຍ ໄດ້ລາຍງານດ້ວຍຄວາມຈິງໃຈ; ສຳລັບທິດທາງຮ່ວມມືໃນຕໍ່ໜ້າ ສືບຕໍ່ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ, ປະຕິບັດບົດບັນທຶກຂອງສອງພາກສ່ວນລົງນາມຮ່ວມກັນ. ຊຸກຍູ້ ແລະ ສ້າງເງື່ອນໄຂໃຫ້ສະພາປະຊາຊົນຂັ້ນທ້ອງຖິ່ນ ໂດຍສະເພາະບັນດາແຂວງທີ່ມີຊາຍແດນຕິດຈອດ ໄດ້ມີການພົບປະ, ແລກປ່ຽນບົດຮຽນ ແລະ ໄປມາຫາສູ່ເຊິ່ງກັນ ແລະ ກັນ. ຈາກນັ້ນ, ສະຫາຍປະທານກຳມາທິການບັນດາເຜົ່າ ພ້ອມດ້ວຍຄະນະ ຍັງໄດ້ເຂົ້າຢ້ຽມຂໍ່ານັບສະຫາຍ ຫາງວຽນ ຄັກ ດິ້ງ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ເຊິ່ງສະຫາຍກໍໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ແລະ ຊົມເຊີຍຕໍ່ຜົນສຳເລັດໃນການເຄື່ອນໄຫວເຮັດວຽກ ຢູ່ ສສ.ຫວຽດນາມ ຂອງສະຫາຍ ປະທານກຳມາທິການບັນດາເຜົ່າ ໃນຄັ້ງນີ້ ພ້ອມອວຍພອນໃຫ້ສາຍພົວພັນມິດຕະພາບອັນສະຫງ່າ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະ ຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ຫວຽດນາມ-ລາວ ຈົ່ງໝັ້ນຄົງທະນົງແກ່ນຕະຫຼອດໄປ. ຈາກນັ້ນ, ສະຫາຍປະທານກຳມາທິການບັນດາເຜົ່າ ພ້ອມດ້ວຍຄະນະ ຍັງໄດ້ເຂົ້າຢ້ຽມຢາມສະຫາຍ ເຈືອງ ທິ ຮາແອງ ຮອງປະທານແນວໂຮມແຫ່ງຊາດ ແລະ ສະຫາຍ ໂຮ ອາ ເລັງ ຫົວໜ້າກຳມະການຊົນເຜົ່າ ຂອງລັດຖະບານ ຫວຽດນາມ.

ໂອກາດດັ່ງກ່າວ, ຄະນະກຳມາທິການບັນດາເຜົ່າ ແລະ ຄະນະຂອງສະພາຊົນຊາດ ສະພາແຫ່ງ ຊາດ ແຫ່ງ ສສ.ຫວຽດນາມ ກໍໄດ້ຮ່ວມກັນຈັດສຳມະນາ ໃນຫົວຂໍ້: ບົດຮຽນການຕິດຕາມການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ກ່ຽວກັບການອະນຸລັກ ແລະ ຂະຫຍາຍຄຸນຄ່າວັດທະນະທຳຂອງບັນດາເຜົ່າ ລະຫວ່າງ ກຳມາທິການບັນດາເຜົ່າ ສະພາແຫ່ງຊາດ ແຫ່ງ ສປປ ລາວ ກັບ ສະພາຊົນຊາດ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ໂດຍການຜັດປ່ຽນກັນເປັນປະທານກອງປະຊຸມລະຫວ່າງສອງຝ່າຍ. ຝ່າຍລາວ ສະເໜີ 2 ຫົວຂໍ້ ຄື: 1. ການອະນຸລັກ ແລະ ເສີມຂະຫຍາຍຄຸນຄ່າວັດທະນະທຳຂອງຊົນເຜົ່າຢູ່ລາວ ແລະ 2. ບົດຮຽນໃນການກອດກາເພື່ອຮັບປະກັນດ້ານນະໂຍບາຍຊົນເຜົ່າ ຕິດພັນກັບການຫຼຸດຜ່ອນຄວາມທຸກຍາກ ເຂົ້າໃນຮ່າງກົດໝາຍ ແລະ ດຳລັດຕ່າງໆ. ຝ່າຍຫວຽດນາມ ສະເໜີ 6 ຫົວຂໍ້ ຄື: 1. ນະໂຍບາຍອະນຸລັກ ແລະ ເສີມຂະຫຍາຍຄຸນຄ່າວັດທະນະທຳມູນເຊື້ອອັນດີງາມຂອງຊົນເຜົ່າສ່ວນນ້ອຍ ຕິດພັນກັບການພັດທະນາການທ່ອງທ່ຽວ, 2. ຜົນສຳເລັດໃນການປະຕິບັດວຽກງານອະນຸລັກ ແລະເສີມຂະຫຍາຍຕົວຕົນວັດທະນະທຳຊົນເຜົ່າສ່ວນນ້ອຍ ແລະ ວຽກງານກໍ່ສ້າງໂຄງການຈຸດໝາຍແຫ່ງຊາດ ກ່ຽວກັບການຟື້ນຟູ ແລະ ພັດທະນາວັດທະນະທຳຫວຽດນາມ, 3. ນະໂຍບາຍສຳລັບເຂດຊົນເຜົ່າສ່ວນນ້ອຍ ແລະ ພູດອຍຢູ່ ຫວຽດນາມ, 4. ບົດຮຽນໃນການຕິດຕາມກອດກາການຫຼຸດຜ່ອນຄວາມທຸກຍາກແບບຍືນຍົງຢູ່ເຂດຊົນເຜົ່າສ່ວນນ້ອຍ ຢູ່ ຫວຽດນາມ, 5. ບັນດາຜົນສຳເລັດທີ່ຍາດໄດ້ ແລະ ບົດຮຽນໃນການສ້າງຊົນນະບົດໃໝ່ ຢູ່ເຂດຊົນເຜົ່າສ່ວນນ້ອຍ ຢູ່ ຫວຽດນາມ ແລະ 6. ນະໂຍບາຍ, ກົດໝາຍ ກ່ຽວກັບການສ້າງສາຊົນນະບົດໃໝ່ ຢູ່ເຂດຊົນເຜົ່າສ່ວນນ້ອຍ ຢູ່ຫວຽດນາມ ຫຼັງຈາກຂຶ້ນສະເໜີບົດສຳເລັດ ທັງສອງຄະນະກໍໄດ້ມີການຖາມ-ຕອບ ແລະ ແລກປ່ຽນຄຳຄິດຄຳເຫັນໃນບັນດາຫົວຂໍ້ທີ່ສອງຝ່າຍມີຄວາມສົນໃຈ.

ຈາກນັ້ນ, ຄະນະ ຍັງໄດ້ໄປຢ້ຽມຢາມໂຄງການສ້າງຊົນນະບົດ ຢູ່ແຂວງ ເທືອ ທຽນ ເຫວ້ ແລະ ຢ້ຽມຊົມບັນດາໂຄງການຕົວແບບກ່ຽວກັບການພັດທະນາເສດຖະກິດ, ວັດທະນະທຳ, ການທ່ອງທ່ຽວ ຢູ່ນະຄອນດານັງ ແລະ ໄດ້ໄປຢ້ຽມຢາມ ແລະ ເຮັດວຽກຮ່ວມກັບການນຳຄະນະກຳມະການສາສະໜາຂອງລັດຖະບານ ຫວຽດນາມ ຕື່ມອີກ.

# ການແກ້ໄຂບັນຫາທີ່ເຄັ່ງຮ້ອນຂອງແຂວງຊຽງຂວາງ



ທ່ານ ບຸນໂຮມ ເທດທານິ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ ໄດ້ໃຫ້ການສຳພາດກ່ຽວກັບສະພາບເຄັ່ງຮ້ອນຂອງແຂວງຊຽງຂວາງ ໃນໂອກາດດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ພາຍໃນແຂວງຊຽງຂວາງ ຍັງມີບາງບັນຫາທີ່ເຄັ່ງຮ້ອນເປັນສິ່ງທ້າທາຍຕໍ່ການພັດທະນາເສດຖະກິດ-ສັງຄົມ ເປັນຕົ້ນແມ່ນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຍັງບໍ່ທັນເຮັດໄດ້ດີ, ບໍ່ເຂັ້ມງວດ ເປັນຜົນເຮັດໃຫ້ຈັງຫວະການຂະຫຍາຍຕົວທາງດ້ານເສດຖະກິດມະຫາພາກຍັງບໍ່ທັນເຂັ້ມແຂງເທົ່າທີ່ຄວນ, ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຍັງບໍ່ເຮັດໄດ້ດີ; ການຄຸ້ມຄອງໂຄງການຊອກສຳຫຼວດ ແລະ ຂຸດຄົ້ນແຮ່ທາດຍັງບໍ່ທັນຄຸ້ມຄອງໄດ້ຕາມສັນຍາ ແລະ ຂັ້ນຕອນຂອງລະບຽບການ ບາງໂຄງການຍັງສ້າງບັນຫາກະທົບຕໍ່ສິ່ງແວດລ້ອມ ແລະ ການດຳລົງຊີວິດຂອງປະຊາຊົນ ແລະ ຍັງບໍ່ໄດ້ຮັບການແກ້ໄຂ; ນອກນີ້, ຍັງມີປະຊາຊົນຈຳນວນໜຶ່ງລັກລອບຂຸດຄົ້ນແຮ່ຄຳຊະຊາຍຢູ່ບາງຈຸດ; ການຊຸກຍູ້ສົ່ງເສີມການຜະລິດຍັງບໍ່ທັນແຂງແຮງ; ບາງຂົງເຂດຍັງມີການບຸກລຸກຈັບຈອງທີ່ດິນຊະຊາຍ ເຮັດໃຫ້ມີຜົນກະທົບຕໍ່ໂຄງການພັດທະນາຈຳນວນໜຶ່ງ; ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຍັງບໍ່ທັນເຮັດໄດ້ຢ່າງເຂັ້ມງວດ ເປັນຕົ້ນແມ່ນການໂຄສະນາເຜີຍແຜ່ນິຕິກຳກ່ຽວຂ້ອງຍັງບໍ່ທັນເລິກເຊິ່ງ, ກວ້າງຂວາງ; ການນຳໃຊ້ມາດຕະການທາງກົດໝາຍຕໍ່ຜູ້ກະທຳຜິດຍັງບໍ່ທັນເຂັ້ມງວດ ເຮັດໃຫ້ເກີດມີປາກົດການຫຍໍ້ທໍ້ໃນສັງຄົມ ເປັນຕົ້ນບາງຂົງເຂດການສຶກສາຍັງມີນັກຮຽນຈຳນວນໜຶ່ງລັກເສບຢາ ແລະ ຜູ້ປົກຄອງຈຳນວນໜຶ່ງຍັງມີການປົກປິດເລື່ອງທຳການກະທຳຜິດຂອງລູກຫຼານ ບໍ່ຈິງໃຈຮ່ວມມືກັບເຈົ້າໜ້າທີ່ ເຮັດໃຫ້ການແກ້ໄຂບໍ່ເຂັ້ມງວດຕາມລະບຽບການ.

ຕໍ່ກັບສະພາບເຄັ່ງຮ້ອນຂອງແຂວງດັ່ງກ່າວ ທ່ານຍັງໃຫ້ຮູ້ວ່າ: ວິທີແກ້ໄຂບັນຫາດັ່ງກ່າວແມ່ນໄດ້ສົມທົບ ຕິດຕາມ ແລະ ຊຸກຍູ້ຂະແໜງການທີ່ກ່ຽວຂ້ອງຂອງແຂວງ, ຂອງເມືອງ ຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ; ບັນຫາທີ່ຫຍຸ້ງຍາກ ແລະ ສຳຄັນໄດ້ນຳເຂົ້າຄົ້ນຄວ້າໃນກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ຫຼື ກອງປະຊຸມຮ່ວມກັບອົງການປົກຄອງແຂວງ ເພື່ອຄົ້ນຄວ້າປຶກສາຫາລື ແລະ ຊອກຫາທິດທາງວິທີການໃນການແກ້ໄຂ ເພື່ອຮັບປະກັນຄວາມສອດຄ່ອງກັບສະພາບຄວາມເປັນຈິງ; ເອົາໃຈໃສ່ເປັນເຈົ້າການໃນການໂຄສະນາເຜີຍແຜ່ມະຕິກອງປະຊຸມສະພາແຫ່ງຊາດ, ສະພາປະຊາຊົນແຂວງ ກໍຄືບັນດາແນວທາງຕ່າງໆຂອງພັກ-ລັດວາງອອກ, ບັນດາລະບຽບ, ກົດໝາຍ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງ ໃນເວລາເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ໃຫ້ຮັບຮູ້ ແລະ ເຂົ້າໃຈ; ພົວພັນປະສານງານກັບພາກສ່ວນກ່ຽວຂ້ອງ, ແຕ່ງຕັ້ງຄະນະຮັບຜິດຊອບລົງຕິດຕາມກວດກາຕົວຈິງ ເພື່ອເກັບກຳຂໍ້ມູນ, ໃຫ້ຮູ້ບັນຫາ, ສາເຫດ ແລະ ວິທີການໃນການນຳສະເໜີພາກສ່ວນກ່ຽວຂ້ອງແກ້ໄຂໃຫ້ທັນກັບເວລາ ແລະ ມີປະສິດທິຜົນ; ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍ ແລະ ປຸກລະດົມປະຊາຊົນບັນດາເຜົ່າພາຍໃນແຂວງ ຕັ້ງໜ້າປະກອບສ່ວນການພັດທະນາເສດຖະກິດ-ສັງຄົມດ້ວຍການປະຕິບັດສິດ ແລະ ພັນທະຂອງພົນລະເມືອງ, ປະຕິບັດບັນດາລະບຽບ, ກົດໝາຍທີ່ວາງອອກ ໃຫ້ມີປະສິດທິຜົນ.

# ມອບອຸປະກອນການແພດ ໃຫ້ໂຮງໝໍແຂວງອຸດົມໄຊ



(ສພຊ) ທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານສະພາປະຊາຊົນແຂວງອຸດົມໄຊ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ມອບອຸປະກອນການແພດ ຢູ່ໂຮງໝໍແຂວງອຸດົມໄຊ ໂດຍການຕ້ອນຮັບຂອງທ່ານ ດຣ. ລັດຕາ ວັນນະຈິດ ອຳນວຍການໂຮງໝໍແຂວງອຸດົມໄຊ ພ້ອມດ້ວຍຄະນະ, ມີບັນດາທ່ານໃນຄະນະປະຈຳສະພາປະຊາຊົນແຂວງ ແລະ ວິຊາການຂະແໜງກ່ຽວຂ້ອງເຂົ້າຮ່ວມ.

ອຸປະກອນການແພດທີ່ນຳມາມອບຄັ້ງນີ້ ປະກອບມີ 18 ລາຍການ ລວມມູນຄ່າປະມານ 100 ລ້ານກີບ ເຊິ່ງໄດ້ຮັບຈາກສະພາແຫ່ງຊາດ ໃນການລະດົມຂົນຂວາຍ ຈາກທັງພາຍໃນ ແລະ ຕ່າງປະເທດ ເພື່ອມາປະກອບເຂົ້າໃນວຽກງານ, ເພື່ອອຳນວຍຄວາມສະດວກໃຫ້ແກ່ແພດໝໍ ໃນການປິ່ນປົວຄົນເຈັບ ແລະ ອື່ນໆ.

ໂອກາດດັ່ງກ່າວ, ທ່ານ ດຣ. ລັດຕາ ວັນນະຈິດ ໄດ້ລາຍງານໂດຍຫຍໍ້ກ່ຽວກັບສະພາບການໂດຍລວມຂອງໂຮງໝໍແຂວງອຸດົມໄຊ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນໄລຍະຜ່ານມາຈົນເຖິງປັດຈຸບັນ, ບັນຫາຕ່າງໆທີ່ພົບພໍ້ ແລະ ວິທີຮັບມືການແຜ່ລະບາດຂອງພະຍາດຕາມລະດູການ. ພ້ອມນັ້ນ, ບັນດາທ່ານທີ່ເຂົ້າຮ່ວມໄດ້ມີຄຳເຫັນຢ່າງກົງໄປກົງມາ.

ຕອນທ້າຍ, ທ່ານ ຄຳເຜີຍ ງອນວັນຄຳ ໄດ້ມີຄຳເຫັນສະແດງຄວາມດີໃຈ ແລະ ຍ້ອງຍໍຊົມເຊີຍຕໍ່ການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງແພດໝໍໃນໄລຍະຜ່ານມາຂອງໂຮງໝໍແຂວງອຸດົມໄຊ ເຫັນວ່າມີຜົນສຳເລັດໃນຫຼາຍດ້ານພົ້ນເດັ່ນ, ແຕ່ກໍບໍ່ປາສະຈາກຂໍ້ຄົງຄ້າງ ແລະ ທ່ານໄດ້ເນັ້ນໜັກໃຫ້ຄະນະພັກສືບຕໍ່ເອົາໃຈໃສ່ໃນການສຶກສາອົບຮົມການເມືອງແນວຄິດໃຫ້ພະນັກງານແພດໝໍ, ເອົາໃຈໃສ່ໃນການຕ້ອນຮັບ ແລະ ປິ່ນປົວຄົນເຈັບຕາມໜ້າທີ່ວຽກງານວິຊາສະເພາະຂອງຕົນໃຫ້ດີຂຶ້ນເລື້ອຍໆ.

**(ແສງພອນ ອິນນະລົງ)**

# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 5 ຢູ່ເມືອງນາແລ ແລະ ເມືອງສິງ



(ສພຊ) ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 3 ແຂວງຫຼວງນ້ຳທາ ແລະ ສະມາຊິກສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ເຄື່ອນໄຫວພົບປະໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ໃນລະຫວ່າງວັນທີ 21-22 ກັນຍາ 2023 ເຊິ່ງນຳໂດຍທ່ານ ກົງເພັດ ແກ້ວບົວພາ ຮອງປະທານສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງປະຈຳເມືອງນາແລ ໄດ້ເຄື່ອນໄຫວຢູ່ 2 ຈຸດຄື: ບ້ານແອນ ແລະ ສະໂມສອນ ເມືອງນາແລ, ມີບັນດາທ່ານ ຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ພະນັກງານ-ລັດຖະກອນ, 2 ກຳລັງປ້ອງການຊາດ-ປ້ອງກັນຄວາມສະຫງົບ, ອະດີດການນຳເມືອງ, ອະດີດພະນັກງານປະຕິບັດອາວຸໂສ, ຄະນະພັກຮາກຖານ, ກຸ່ມບ້ານ, ນາຍບ້ານ, ອົງການປົກຄອງບ້ານ ແລະ ປະຊາຊົນບັນດາເຜົ່າພາຍໃນເມືອງນາແລ ເຂົ້າຮ່ວມທັງໝົດ 365 ທ່ານ ຍິງ 92 ຄົນ.

ໂອກາດດັ່ງກ່າວ, ສະມາຊິກສະພາແຫ່ງຊາດ ໄດ້ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງກອງປະຊຸມໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດເປັນຕົ້ນແມ່ນໄດ້ພິຈາລະນາຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນ ແລະ ແຜນການ 6 ເດືອນທ້າຍປີ 2023, ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນ ປີ 2023, ບົດລາຍງານຂອງລັດຖະບານກ່ຽວກັບວິໄສທັດ ຮອດປີ 2040 ແລະ ຍຸດທະສາດການພັດທະນາແຮ່ທາດ ຮອດປີ 2030, ບົດລາຍງານຂອງລັດຖະບານ ກ່ຽວກັບວິໄສທັດ ຮອດປີ 2040 ແລະ ຍຸດທະສາດການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030, ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ (2020-2030), ບົດລາຍງານການປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ, ບົດລາຍງານການແຕ່ງຕັ້ງສະມາຊິກຜູ້ພິພາກສາຂອງສານປະຊາຊົນສູງສຸດ, ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 4 ຫາ ເທື່ອທີ 5 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX, ຮັບຮອງເອົາກົດໝາຍຈຳນວນ 10 ສະບັບ ໃນນັ້ນ, ກົດໝາຍສ້າງໃໝ່ມີ 4 ສະບັບ, ກົດໝາຍປັບປຸງມີ 6 ສະບັບ.

ພ້ອມນັ້ນ, ສະມາຊິກສະພາປະຊາຊົນແຂວງ ໄດ້ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະມາຊິກສະພາປະຊາຊົນແຂວງຫຼວງນ້ຳທາ ຊຸດທີ II ເຊິ່ງກອງປະຊຸມໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນຂອງແຂວງເປັນຕົ້ນແມ່ນພິຈາລະນາຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ໄລຍະກາງສະໄໝ ແລະ ແຜນການທ້າຍສະໄໝຂອງແຂວງ, ບົດລາຍງານການຈັດຕັ້ງປະຕິບັດແຜນເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023 ຂອງແຂວງ, ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານໄລຍະກາງສະໄໝ ແລະ ແຜນການທ້າຍສະໄໝອົງການໄອຍະການປະຊາຊົນ ແລະ ສານປະຊາຊົນແຂວງ, ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023 ຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນແຂວງ, ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ (2021-2023); ການເຄື່ອນໄຫວວຽກງານ ລະຫວ່າງສອງກອງປະຊຸມຜ່ານມາ ແລະ ແຜນການທ້າຍສະໄໝ (2023-2025) ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ແລະ ບົດລາຍງານຜົນຂອງການປະເມີນຄວາມໄວ້ວາງໃຈຂອງບຸກຄະລາກອນ ທີ່ສະພາປະຊາຊົນແຂວງເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ, ຮັບຟັງບົດລາຍງານການຈັດຕັ້ງປະຕິບັດກອງທຶນປະກັນສຸຂະພາບແຫ່ງຊາດຂອງແຂວງຫຼວງນ້ຳທາ ແລະ ຮັບຟັງບົດລາຍງານກ່ຽວກັບການຄຸ້ມຄອງຮ້ານແລກປ່ຽນເງິນຕາ ແລະ ການແລກປ່ຽນເງິນຕາຕ່າງປະເທດ. ພ້ອມກັນນັ້ນ, ພະນັກງານ-ລັດຖະກອນ ແລະ ພໍ່ແມ່ປະຊາຊົນ ຍັງໄດ້ສະເໜີຫາສະມາຊິກສະພາປະຊາຊົນແຂວງກ່ຽວກັບການພັດທະນາບ້ານ ເປັນຕົ້ນແມ່ນພະນັກງານ-ລັດຖະກອນສະເໜີ ເພີ່ມເງິນເດືອນໃຫ້ພະນັກງານ-ລັດຖະກອນ ແລະ ພໍ່ແມ່ປະຊາຊົນສະເໜີກ່ຽວກັບ ສັນຍານໂທລະສັບ, ເສັ້ນທາງເຂົ້າບ້ານ, ການຈັດສັນທີ່ດິນທຳການຜະລິດ ແລະ ເຄື່ອງນຸ່ງຫົ່ມໃຫ້ນ້ອງນັກຮຽນໃນຕາມລະດູການ ແລະ ອື່ນໆ.

ໃນໄລຍະດຽວກັນ, ທ່ານນາງ ອຸ່ນຫຼ້າ ອ້ຽງລໍລາດ ຮອງປະທານສະພາປະຊາຊົນແຂວງ, ມີທ່ານ ຄຳປາຍ ສຸລິຂັນ ຫົວໜ້າ ສສຂ ປະຈຳເຂດເລືອກຕັ້ງເມືອງສິງ, ປະທານອົງການກວດກາພັກ ຫົວໜ້າອົງການກວດກາລັດ ກໍໄດ້ເຄື່ອນໄຫວເຜີຍແຜ່ຢູ່ 2 ບ້ານຄື: ບ້ານປ່າຄາ ແລະ ບ້ານສົ້ ເມືອງສິງ ແຂວງຫຼວງນ້ຳທາອີກດ້ວຍ.

# ຝຶກອົບຮົມກ່ຽວກັບການຄຸ້ມຄອງ ແລະ ປົກປ້ອງ ການເຄື່ອນໄຫວສາສະໜາ



(ສພຊ) ເພື່ອເຮັດໃຫ້ສະມາຊິກສະພາປະຊາຊົນຂັ້ນແຂວງ, ບັນດາຂະແໜງການອ້ອມຂ້າງແຂວງ ແລະ ເມືອງ ມີຄວາມຮັບຮູ້, ເຂົ້າໃຈຢ່າງຖືກຕ້ອງ ແລະ ຈະແຈ້ງ ກ່ຽວກັບຂັ້ນຕອນ ແລະ ວິທີການ ໃນການແກ້ໄຂບັນຫາຕ່າງໆໃນການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ໃຫ້ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ-ລັດ ແລະ ລະບຽບກົດໝາຍ.

ກອງປະຊຸມຝຶກອົບຮົມກ່ຽວກັບການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ໃຫ້ແກ່ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະແນກການທີ່ກ່ຽວຂ້ອງ ໄດ້ເປີດຂຶ້ນໃນວັນທີ 21 ກັນຍາ 2023 ທີ່ເມືອງຊານໄຊ ແຂວງອັດຕະປື ໂດຍການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງອັດຕະປື; ເຂົ້າຮ່ວມມີວິທະຍາກອນທີ່ມາຈາກອົງການແນວລາວສ້າງຊາດແຂວງ, ສະພາປະຊາຊົນແຂວງ, ພະແນກພາຍໃນ, ກອງບັນຊາການ ປກສ, ມີສຳມະນາກອນທີ່ເປັນສະມາຊິກສະພາປະຊາຊົນແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງຂອງແຂວງ ແລະ ເມືອງ ເຂົ້າຮ່ວມທັງໝົດ 50 ກວ່າທ່ານ.

ໃນກອງປະຊຸມ, ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ກ່າວເປີດຝຶກອົບຮົມວ່າ: ເພື່ອຮັບປະກັນເຮັດໃຫ້ກອງປະຊຸມໄດ້ຮັບປະສິດທິຜົນສູງນັ້ນ, ບັນດາເອກະສານທີ່ນຳມາສະເໜີແມ່ນໄດ້ຄັດຈ້ອນນຳເອົາເນື້ອໃນທີ່ເລິກເຊິ່ງ, ຄົບຖ້ວນ ແລະ ສາມາດນຳໄປຈັດຕັ້ງປະຕິບັດໃນວຽກງານຕົວຈິງ ເຊິ່ງປະກອບມີເອກະສານ ຄື: ສະພາບການກ່ຽວກັບວຽກງານສາສະໜາ ແລະ ທັດສະນະໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ແລະ ວຽກງານສາສະໜາ; ບົດຮຽນໃນການຄຸ້ມຄອງລັດ ກ່ຽວກັບວຽກງານສາສະໜາ ແລະ ວຽກງານທີ່ຄວນເອົາໃຈໃສ່ໃນຕໍ່ໜ້າກ່ຽວກັບວຽກງານສາສະໜາ; ບົດຮຽນກ່ຽວກັບການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ວຽກງານຂອງອົງການແນວລາວສ້າງຊາດແຂວງ, ຕິດພັນກັບການແກ້ໄຂປາກົດການຫຍໍ້ທໍ້ທາງດ້ານສາສະໜາຢູ່ແຂວງອັດຕະປື; ບົດຮຽນກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງປກສ ແຂວງ ຕິດພັນກັບການແກ້ໄຂປາກົດການຫຍໍ້ທໍ້ທາງດ້ານສາສະໜາຢູ່ແຂວງອັດຕະປື; ບົດຮຽນກ່ຽວກັບການຕິດຕາມກວດກາຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍວຽກງານການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາຂອງກຳມະການວັດທະນະທຳ-ສັງຄົມ ແລະບັນດາເຜົ່າ ຢູ່ແຂວງອັດຕະປື.

ພ້ອມນັ້ນນີ້, ທ່ານຍັງໄດ້ຮຽກຮ້ອງໃຫ້ຜູ້ເຂົ້າຮ່ວມກອງປະຊຸມທັງໝົດ, ຈົ່ງເພີ່ມທະວີຄວາມຮັບຜິດຊອບຂອງຕົນປະກອບຄວາມຄິດຄວາມເຫັນຢ່າງເລິກເຊິ່ງ, ມີລັກສະນະສ້າງສັນ ແລະ ປະຊາທິປະໄຕ ເພື່ອເຮັດໃຫ້ກອງປະຊຸມຝຶກອົບຮົມສຳມະນາ ແລະ ສ້າງຄວາມເຂັ້ມແຂງ ກ່ຽວກັບການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ຢູ່ແຂວງອັດຕະປືໃນເທື່ອນີ້ ໃຫ້ບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນໂດຍໂຄງການສ້າງຄວາມເຂັ້ມແຂງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPS) ແລະ ໄດ້ສຳເລັດລົງຕາມລະດັບຄາດໝາຍທີ່ວາງໄວ້ໃນວັນຕໍ່ມາ.

**(ວິນັດ)**



# ສພຂ ສາລະວັນ ຕິດຕາມກວດກາການປະເມີນ ການຈັດຕັ້ງປະຕິບັດກົດໝາຍຂົງເຂດ ປກຊ-ປກສ





(ສພຊ) ໂດຍປະຕິບັດຕາມແຈ້ງການຂອງຄະນະເລຂາທິການສະພາແຫ່ງຊາດ ສະບັບເລກທີ 397/ຄລສ.ກປຊສ ແລະ ຄຳແນະນຳຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ສະພາແຫ່ງຊາດ ສະບັບເລກທີ 261/ກປຊສ ກ່ຽວກັບຄຳແນະນຳຈັດກອງປະຊຸມຕິດຕາມ, ກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ 3 ສະບັບ ຂົງເຂດ ປກຊ-ປກສ; ໃນວັນທີ 22 ກັນຍາ 2023 ສະພາປະຊາຊົນແຂວງສາລະວັນ ໄດ້ຈັດກອງປະຊຸມຕິດຕາມ, ກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ 3 ສະບັບ ຂົງເຂດ ປກຊ-ປກສ ຄື: ກົດໝາຍວ່າດ້ວຍການປ້ອງກັນຊາດ, ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບ ໂດຍການເປັນປະທານກອງປະຊຸມຂອງທ່ານ ຂັນໄຊ ລັດຖະເຮົ້າ ຮອງປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມຂອງທ່ານ ນາງ ສູນໄຖ ໄຊຍະແສງ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ; ຕາງໜ້າຈາກກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ກອງບັນຊາການທະຫານແຂວງ, ຫ້ອງວ່າການແຂວງ, ສະຫະພັນນັກຮົບເກົ່າແຂວງ ແລະ ອົງການຈັດຕັ້ງມະຫາຊົນເຂົ້າຮ່ວມ.

ທັງນີ້, ກໍເພື່ອກວດກາ ແລະ ຊຸກຍູ້ກອງບັນຊາການ ປກຊ-ປກສ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດ ປກຊ-ປກສ ໃຫ້ສຳເລັດຕາມແຜນ, ມີປະສິດທິພາບ ແລະ ປະສິດທິຜົນ, ເພື່ອເຮັດໃຫ້ບົດສະຫຼຸບຕີລາຄາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດ ປກຊ-ປກສ 3 ສະບັບ ທີ່ຈະລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ມີເນື້ອຄົບຖ້ວນ, ຖືກຕ້ອງສອດຄ່ອງ ຕາມກົດໝາຍ ແລະ ແທດເໝາະກັບຕົວຈິງ ແລະ ເພື່ອຍົກສູງປະສິດທິພາບໃນການຊີ້ນຳບັນຊາການປະຕິບັດໜ້າທີ່ຂອງກຳລັງ ປກຊ-ປກສ ເຮັດໃຫ້ວຽກງານດັ່ງກ່າວເປັນຄວາມຮັບຜິດຊອບຂອງທົ່ວປວງຊົນແນໃສ່ຮັບປະກັນໃຫ້ປະເທດຊາດມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ມີຄວາມໝັ້ນຄົງ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງການລາຍງານການປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປ້ອງກັນຊາດ ປະກອບມີ 10 ພາກ, 65 ມາດຕາ ແລະ ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ປະກອບມີ 5 ພາກ, 50 ມາດຕາ ພ້ອມທັງໄດ້ຍົກໃຫ້ເຫັນບາງໝວດ ບາງມາດຕາຂອງກົດໝາຍ ທັງ 2 ສະບັບ ເປັນຕົ້ນແມ່ນການກຳນົດອາຍຸກະສຽນປະດັບຊັ້ນ,ເລື່ອນຊັ້ນ, ປະທັບທຽບຊັ້ນ, ເລື່ອນທຽບຊັ້ນໃຫ້ນາຍທະຫານແຕ່ລະຂັ້ນ, ອາຍຸກະສຽນຮັບບຳນານ, ການຍົກຂັ້ນເງິນເດືອນຂອງນາຍທະຫານ, ກຳນົດເວລາຍົກຂັ້ນເງິນເດືອນຮອບວຽນຂອງແຕ່ລະຂັ້ນ ແລະ ນະໂຍບາຍຂອງລັດ ກ່ຽວກັບວຽກງານປ້ອງກັນຊາດ, ການບັນຊາກອງທັບປະຊາຊົນລາວ, ການຮັບປະກັນການເຄື່ອນໄຫວຂອງກຳລັງປະກອບອາວຸດ, ຮັບປະກັນການປ້ອງກັນຊາດ, ການກຳນົດໂຄງສ້າງຂອງກົດໝາຍພາກ, ໝວດ, ມາດຕາຂອງກົດໝາຍທັງ 2 ສະບັບ ໃຫ້ຖືກຕ້ອງ ແລະ ສອດຄ່ອງ. ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ຮັບຟັງການຜ່ານບົດລາຍງານການປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບ ເຊິ່ງປະກອບມີ 9 ພາກ, 55 ມາດຕາຕື່ມອີກ.

**(ດີລຳພົນ ພົມມະຈັນ)**

# ປະທານສະພາປະຊາຊົນແຂວງບໍ່ແກ້ວ ພົບປະຜູ້ມີສິດເລືອກຕັ້ງ ຢູ່ເມືອງປາກທາ




(ສພຊ) ທ່ານ ຈອມສີ ລັດຕະນະປັນ ປະທານຄະນະສະພາແຫ່ງຊາດປະຈຳຂດເລືອກຕັ້ງທີ 5, ປະທານສະພາປະຊາຊົນແຂວງບໍ່ແກ້ວ, ທ່ານ ອ່ອງຄຳ ໄຊຍະລາດ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງປາກທາ,ຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ໄດ້ເຄື່ອນໄຫວພົບປະໂອ້ລົມພະນັກງານ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະພາປະຊາຊົນແຂວງບໍ່ແກ້ວ ຊຸດທີ II ໃຫ້ແກ່ພະນັກງານຫຼັກແຫຼ່ງອ້ອມຂ້າງເມືອງ ແລະ ພໍ່ແມ່ປະຊາຊົນ 2 ບ້ານພາຍໃນເມືອງປາກທາ ຄື: ບ້ານໃຫຍ່ປາກທາ ແລະ ບ້ານຫ້ວຍທອງ ໂດຍມີທ່ານ ສຸໄລ ດວງຜາຄຳ ເຈົ້າເມືອງປາກທາ ແລະ ບັນດາການນຳຂອງເມືອງ, ພະນັກງານຫຼັກແຫຼ່ງອ້ອມຂ້າງເມືອງ, ຄະນະພັກ-ອຳນາດການປົກຄອງບ້ານ, ການຈັດຕັ້ງບ້ານ, ເຖົ້າແກ່ແນວໂຮມ ແລະ ພໍ່ແມ່ປະຊາຊົນເຂົ້າຮ່ວມຮັບຟັງ.

ທ່ານ ຈອມສີ ລັດຕະນະປັນ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອ 5 ຂອງສະພາແຫ່ງຊາດ ເຊິ່ງກອງປະຊຸມດັ່ງກ່າວ ສະມາຊິກສະມາຊິກສະພາແຫ່ງຊາດແຕ່ລະທ່ານໄດ້ເສີມຂະຫຍາຍຄວາມຮູ້, ຄວາມສາມາດ, ສິດປະຊາທິປະໄຕ ແລະ ມີຄວາມຮັບຜິດຊອບສູງ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າພ້ອມກັນເອົາໃຈໃສ່ຄົ້ນຄວ້າພິຈາລະນາເຫັນດີ ແລະ ເປັນເອກະພາບຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນຕົ້ນ ແລະ ແຜນການ 6 ເດືອນທ້າຍປີ 2023 ຂອງລັດຖະບານ, ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2023, ບົດລາຍງານກ່ຽວກັບວິໄສທັດຮອດປີ 2040, ຍຸດທະສາດການພັດທະນາແຮ່ທາດ, ການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດຮອດປີ 2030, ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໄດ້ຮັບຮອງປະກາດໃຊ້ຕາມດຳລັດ ຂອງການນາຍົກລັດຖະມົນຕີ ສະບັບເລກທີ 224/ນຍ, ລົງວັນທີ 1 ເມສາ 2020 ເຊິ່ງໄດ້ກຳນົດວິໄສທັດ,

ອ່ານຕໍ່ໜ້າ 7

# ຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ



(ສພຂ) ໂດຍປະຕິບັດຕາມແຈ້ງການ ແລະ ຄຳແນະນຳເພີ່ມຕື່ມຂອງກຳມາທິການປ້ອງການຊາດ-ປ້ອງກັນຄວາມສະຫງົບຂອງສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງກອງປະຊຸມຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຕອນເຊົ້າຂອງວັນທີ 25 ກັນຍາ 2023 ຢູ່ທີ່ຫ້ອງປະຊຸມທະຫານແຂວງອຸດົມໄຊ ໄດ້ຈັດກອງປະຊຸມຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈຳນວນ 3 ສະບັບ: ກົດໝາຍວ່າດ້ວຍປ້ອງກັນຊາດ, ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານຄະນະສະມາຊິກສະພາແຫ່ງປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ, ເຂົ້າຮ່ວມມີສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 4, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ, ສອງກອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ແນວລາວສ້າງຊາດ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ພະແນກຍຸຕິທຳ, ຫ້ອງວ່າການແຂວງ, ສະຫະພັນນັກຮົບເກົ່າ, 3 ອົງການຈັດຕັ້ງມະຫາຊົນ ແລະ ແຂກເຊີນເຂົ້າຮ່ວມທັງໝົດ 66 ທ່ານ ຍິງ 15 ທ່ານ.

ໃນກອງປະຊຸມ, ທ່ານ ພັອ. ຕຸ້ຍ ພົມມີໄຊ ຫົວໜ້າການເມືອງກອງບັນຊາການທະຫານແຂວງ ໄດ້ຜ່ານບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍວ່າດ້ວຍປ້ອງກັນຊາດ ແລະ ທ່ານ ພັອ. ບຸນແພງ ລໍມີຈັນ ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ ໄດ້ຜ່ານບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບ. ຫຼັງຈາກນັ້ນ, ປະທານກອງປະຊຸມຍັງໄດ້ມີຄຳເຫັນເຈາະຈີ້ມ ແລະ ໃຫ້ທິດຊີ້ນຳໃນການປະກອບຄຳເຫັນຕໍ່ກັບບົດປະເມີນການຈັດຕັ້ງປະຕິບັດກົດໝາຍຈຳນວນ 3 ສະບັບດັ່ງກ່າວ; ພ້ອມກັນນັ້ນ, ຜູ້ແທນກອງປະຊຸມໄດ້ສຸມໃສ່, ຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນ ຕາມຄຳຖາມເຈາະຈີ້ມຢ່າງເປັນຂະບວນຟົດຟື້ນ ເຊິ່ງການປະກອບຄຳເຫັນເຫຼົ່ານັ້ນຈະເປັນຂໍ້ມູນໃຫ້ແກ່ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ເພື່ອຈະເຂົ້າຮ່ວມກອງປະຊຸມການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ຂັ້ນສູນກາງ, ກອງປະຊຸມຄັ້ງນີ້ຄະນະກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ປະຈຳປີ 2023, ຄາດວ່າກອງປະຊຸມຈະໄດ້ຈັດຂຶ້ນວັນທີ 12-13 ຕຸລາ 2023 ແລະ ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX.

ຕອນທ້າຍ, ປະທານກອງປະຊຸມໄດ້ສະຫຼຸບ-ສັງລວມການປະກອບຄຳຄິດຄຳເຫັນຂອງກອງປະຊຸມຕໍ່ກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຈຳນວນ 3 ສະບັບ. ພ້ອມນັ້ນ, ຍັງໄດ້ມີຄຳເຫັນແນະນຳຄະນະຮັບຜິດຊອບ ແລະ ມອບໃຫ້ກອງເລຂາບັນທຶກ ແລະ ສະຫຼຸບສັງລວມ, ລາຍງານຜົນຂອງການໄດ້ຮັບຂອງກອງປະຊຸມຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດ 3 ກົດໝາຍ ເພື່ອສົ່ງໃຫ້ຄະນະຮັບຜິດຊອບຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງສະພາແຫ່ງຊາດໃຫ້ທັນກັບເວລາ.

**(ສີແຫວງ ສີບຸນເຮືອງ)**




# ປະທານຄະນະສະມາຊິກສະພາແຫ່ງຊາດ ເຂດ 12 ພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງມະຫາໄຊ



(ສພຊ) ທ່ານ ບຸນມີ ພິມມະສອນ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ, ປະທານສະພາປະຊາຊົນແຂວງຄຳມ່ວນ, ທ່ານ ບົວພັນ ແສງຈັນ ຮອງປະທານສະພາປະຊາຊົນແຂວງຄຳມ່ວນ ທັງເປັນສະມາຊິກສະພາປະຊາຊົນແຂວງປະຈຳເມືອງມະຫາໄຊ ພ້ອມດ້ວຍຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງມະຫາໄຊ ໄດ້ເຄື່ອນໄຫວພົບປະປະຊາຊົນທີ່ຕິດພັນກັບການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງຄຳມ່ວນ ໃນລະຫວ່າງວັນທີ 19-22 ກັນຍາ 2023 ຊຸດທີ II ຢູ່ 6 ຈຸດ ຂອງເມືອງມະຫາໄຊຄື: ທີ່ສະໂມສອນເມືອງ, ບ້ານແຕນ, ນາກອກ, ສົມສະໜຸກ, ນາຈານ ແລະ ບ້ານໂນນແດງ ໂດຍການຕ້ອນຮັບ ແລະ ເຮັດວຽກຂອງທ່ານ ສົມບູນ ແກ້ວວົງສາ ເຈົ້າເມືອງມະຫາໄຊ, ມີຮອງເຈົ້າເມືອງພ້ອມດ້ວຍບັນດາທ່ານຄະນະປະຈຳພັກເມືອງ, ພະນັກງານ-ລັດຖະກອນ, ກຳລັງ ປກຊ-ປກສ,ອຳນາດການປົກຄອງຂັ້ນບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນ ເຂົ້າຮ່ວມທັງໝົດ 913 ເທື່ອຄົນ ຍິງ 344 ເທື່ອຄົນ.

ການເຄື່ອນໄຫວຄັ້ງນີ້, ໄດ້ຮັບຟັງການລາຍງານໂດຍສັງເຂບກ່ຽວກັບການຈັດຕັ້ງປະຕິບັດແຜນການການພັດທະນາເສດຖະກິດ-ສັງຄົມຂອງອຳນາດການປົກເມືອງ ແລະ ຂອງບ້ານແຕ່ລະຈຸດ. ຈາກນັ້ນ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງໄດ້ຜັດປ່ຽນກັນຂຶ້ນເຜີຍແຜ່ເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II ເຊິ່ງໄດ້ຍົກໃຫ້ເຫັນການພິຈາລະນາ ແລະ ຮັບຮອງບາງບັນຫາສຳຄັນພື້ນຖານຕ່າງໆຂອງຊາດ, ຂອງທ້ອງຖິ່ນ; ພ້ອມນັ້ນ, ກໍໄດ້ຮັບຟັງການປະກອບຄຳຄິດ-ຄຳເຫັນ ແລະ ຄຳສະເໜີບາງບັນຫາທີ່ຂັດຂ້ອງໝອງໃຈຈາກປະຊາຊົນ ໂດຍສ່ວນຫຼາຍແມ່ນກ່ຽວກັບການສ້າງສາພັດທະນາພື້ນຖານໂຄງລ່າງ, ຕໍ່ກັບບັນຫາທີ່ອຳນາດການປົກເມືອງ, ບ້ານ ແລະ ປະຊາຊົນໄດ້ສະເໜີມານັ້ນ, ບາງບັນຫາ ທາງຄະນະຜູ້ແທນສະພາປະຊາຊົນ ກໍໄດ້ຊີ້ແຈງ ແລະ ໃຫ້ຄວາມກະຈ່າງແຈ້ງ ສ່ວນບາງຄຳສະເໜີທີ່ຕິດກັບຫຼາຍພາກສ່ວນກໍຈະໄດ້ນຳເອົາໄປຄົ້ນຄວ້າ, ປຶກສາຫາລື ແລະ ສັງລວມມອບໃຫ້ຄະນະກຳມະການທີ່ກ່ຽວຂ້ອງປະສານສົມທົບກັບພາກສ່ວນຕ່າງໆຂອງອົງການປົກຄອງແຂວງ ນຳໄປຄົ້ນຄວ້າແກ້ໄຂ ໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

ໂອກາດດັ່ງກ່າວ, ທ່ານ ບຸນມີ ພິມມະສອນ ຍັງໄດ້ມີຄຳເຫັນໂອ້ລົມ ແລະ ໃຫ້ທິດຊີ້ນຳຕໍ່ອົງການປົກຄອງເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ, ຕໍ່ກັບບັນຫາການພັດທະນາເສດຖະກິດ-ສັງຄົມຂອງເມືອງທີ່ຕິດພັນກັບສອງວາລະແຫ່ງຊາດ ແລະ ການເກັບລາຍຮັບເຂົ້າງົບປະມານໃຫ້ສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍທີ່ວາງໄວ້, ຕໍ່ກັບສະພາບການເໜັງຕີງຂອງລາຄານ້ຳມັນເຊື້ອໄຟ, ລາຄາສິນຄ້າ, ອັດຕາແລກປ່ຽນ ແລະ ຄວາມຫຍຸ້ງຍາກອື່ນໆ ສົ່ງຜົນກະທົບສ້າງຄວາມເສຍຫາຍໃຫ້ແກ່ເສດຖະກິດ ແລະ ການດຳລົງຊີວິດຂອງປະຊາຊົນ ກໍຄືຂອງອົງການຈັດຕັ້ງພັກ-ລັດ ໃນການຮ່ວມກັນແກ້ໄຂບັນຫາທີ່ມີຄວາມຫຍຸ້ງຍາກໃຫ້ບັນລຸຜົນສຳເລັດຕາມຈຸດປະສົງຄາດໝາຍ. ພ້ອມນີ້, ທ່ານ ບຸນມີ ພິມມະສອນ ຍັງໄດ້ເນັ້ນໃຫ້ອົງການປົກຄອງເມືອງ, ບ້ານ ແລະ ພໍ່ແມ່ປະຊາຊົນ ສືບຕໍ່ຍຶດໝັ້ນຕໍ່ການນຳພາຂອງພັກ-ລັດ, ຮັກສາມູນເຊື້ອທີ່ຍາດມາໄດ້ໃນທ່າມກາງສະພາບການຫຍຸ້ງຍາກທາງດ້ານເສດຖະກິດ ໃຫ້ຜະລິດເອງ ກຸ້ມຕົນເອງ ເປັນເຈົ້າຕົນເອງ; ໃຫ້ເອົາໃຈໃສ່ປຸກລະດົມປູກຝັງຈິດສຳນຶກ ແລະ ສົ່ງເສີມໃຫ້ລູກຫຼານໄດ້ຮ່ຳຮຽນໃຫ້ສອດຄ່ອງກັບສະພາບຕົວຈິງ, ຕ້ານປາກົດການຫຍໍ້ທໍ້ຕ່າງໆທີ່ຈະເກີດຂຶ້ນ ແລະ ສ້າງຂະບວນການຜະລິດເປັນສິນຄ້າໜຶ່ງເມືອງ-ໜຶ່ງຜະລິດຕະພັນ ກໍຄືຂະບວນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ນັບມື້ດີຂຶ້ນເປັນກ້າວໆ.



## ປະທານສະພາ...

(ຕໍ່ຈາກໜ້າ 6)

ຫຼັກການແລະ 3 ເປົ້າໝາຍການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບປະກັນສຸຂະພາບແຫ່ງຊາດ, ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຫາ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ພິຈາລະນາຮັບຮອງເອົາກົດໝາຍສ້າງໃໝ່ມີ 4 ສະບັບ, ກົດໝາຍປັບປຸງ ມີ 6 ສະບັບ ລວມ 10 ສະບັບ ແລະ ຍັງໄດ້ຍົກໃຫ້ເຫັນສະພາບລວມຂອງພາກພື້ນ, ສະພາບພາຍໃນປະເທດເຮົາ ກໍຄືການປະຕິບັດໜ້າທີ່ຂອງສະພາແຫ່ງຊາດ ຊຸດທີ IX, ຄວາມໝາຍຄວາມສຳຄັນຂອງ ສສຊ-ສສຂ ກໍຄືຜົນງານດ້ານຕ່າງໆທີ່ພັກ-ລັດຖະບານສາມາດຍາດມາໄດ້ໃນໄລຍະຜ່ານມາ ລວມທັງສິ່ງທ້າທາຍທິດສອບ ແລະ ຄາດໝາຍສູ້ຊົນໃນຕໍ່ໜ້າ; ພ້ອມນີ້, ຍັງໄດ້ເປີດໂອກາດໃຫ້ພໍ່ແມ່ປະຊາຊົນຊັກຖາມ ແລະ ສະເໜີບາງບັນຫາທີ່ຂ້ອງໃຈ ເຊິ່ງຜູ້ແທນ ແລະ ຂະແໜງການກ່ຽວຂ້ອງ ກໍໄດ້ຕອບຄຳຖາມ ແລະ ຮັບເອົາຄຳສະເໜີຂອງພໍ່ແມ່ປະຊາຊົນ ເພື່ອນຳໄປປຶກສາຫາລືກັບໝູ່ຄະນະ ພິຈາລະນາແກ້ໄຂຕາມຄວາມເໝາະສົມ.



ຈາກນັ້ນ, ທ່ານ ອ່ອງຄຳ ໄຊຍະລາດ ໄດ້ສືບຕໍ່ເຜີຍແຜ່ຜົນສຳເລັດກອງປະຊຸມສະພາປະຊາຊົນແຂວງ ເພື່ອໃຫ້ຜູ້ເຂົ້າຮ່ວມຮັບຮູ້ເຂົ້າໃຈຢ່າງຈະແຈ້ງ, ປະຕິບັດຢ່າງຖືກຕ້ອງ ແລະ ເພື່ອເປັນບ່ອນອີງໃນການນຳພາ-ຊີ້ນຳວຽກງານຂອງຂະແໜງທີ່ຕົນເອງຮັບຜິດຊອບ ທັງຮັບຟັງຄຳຄິດຄຳເຫັນ ແລະ ໂອ້ລົມກັບຜູ້ມີສິດເລືອກຕັ້ງຕື່ມອີກ.




# ກົດໝາຍ ວ່າດ້ວຍຄວາມປອດໄພຂອງເຂື່ອນ

ຕໍ່ຈາກສະບັບກ່ອນ

5. ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມຖືກຮັບຮອງ;
6. ປະຕິບັດພັນທະຕາມສັນຍາ.

**ມາດຕາ 21 ການກໍ່ສ້າງເຂື່ອນ**

ໃນການກໍ່ສ້າງເຂື່ອນ ຜູ້ພັດທະນາເຂື່ອນ ຕ້ອງປະຕິບັດຕາມການອອກແບບທີ່ໄດ້ກຳນົດໄວ້ໃນມາດຕາ 17 ແລະ 18 ຂອງກົດໝາຍສະບັບນີ້, ມາດຕະຖານເຕັກນິກຂອງຂະແໜງການທີ່ກ່ຽວຂ້ອງ ຫຼື ມາດຕະຖານເຕັກນິກສາກົນທີ່ສູງກວ່າ ລວມທັງປະຕິບັດຕາມແຜນການກໍ່ສ້າງເຂື່ອນ ທີ່ຜ່ານການຮັບຮອງແລ້ວ. ໃນການດຳເນີນການກໍ່ສ້າງຕົວຈິງ ຫາກເຫັນວ່າ ສະພາບທໍລະນີສາດສຳລັບການກໍ່ສ້າງເຂື່ອນ ມີຈຸດບົກຜ່ອງ, ມີຄວາມສ່ຽງ, ບໍ່ຮັບປະກັນດ້ານຄວາມປອດໄພ ຫຼື ບໍ່ໄດ້ມາດຕະຖານຕາມການອອກແບບ ໃຫ້ຜູ້ພັດທະນາເຂື່ອນ ຮີບຮ້ອນປັບປຸງແບບ ແລ້ວສົ່ງໃຫ້ຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາຮັບຮອງຄືນໃໝ່.

**ມາດຕາ 22 ການຕິດຕັ້ງອຸປະກອນຕິດຕາມເຂື່ອນ**

ຜູ້ພັດທະນາເຂື່ອນ ຕ້ອງຕິດຕັ້ງອຸປະກອນຕິດຕາມເຂື່ອນໃຫ້ຖືກຕ້ອງຕາມແບບທີ່ໄດ້ກຳນົດໄວ້ໃນມາດຕາ 17 ແລະ 18 ຂອງກົດໝາຍສະບັບນີ້ ແລະ ໃຫ້ສອດຄ່ອງກັບມາດຕະຖານເຕັກນິກຂອງຂະແໜງການທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນການຕິດຕັ້ງອຸປະກອນຕິດຕາມເຂື່ອນ ແລະ ລະບົບສື່ສານທີ່ຮັບໃຊ້ເຂົ້າໃນວຽກງານຄວາມປອດໄພຂອງເຂື່ອນ ໃຫ້ປະຕິບັດຕາມມາດຕະຖານເຕັກນິກ ຂອງຂະແໜງ ການທີ່ກ່ຽວຂ້ອງ ຫຼື ມາດຕະຖານສາກົນທີ່ສູງກວ່າ ຢ່າງເຂັ້ມງວດ.

**ມາດຕາ 23 ແຜນຄຸ້ມຄອງຄຸນນະພາບການກໍ່ສ້າງເຂື່ອນ**

ຜູ້ພັດທະນາເຂື່ອນ ຕ້ອງສ້າງແຜນຄຸ້ມຄອງຄຸນນະພາບກໍ່ສ້າງເຂື່ອນ ແລະ ສົ່ງແຜນດັ່ງກ່າວໃຫ້ຂະແໜງການທີ່ກ່ຽວຂ້ອງ. ໃນການດຳເນີນການກໍ່ສ້າງເຂື່ອນຕົວຈິງ ຜູ້ພັດທະນາເຂື່ອນ ຕ້ອງສ້າງຕັ້ງໜ່ວຍງານຄຸ້ມຄອງຄຸນນະພາບການກໍ່ສ້າງ, ວ່າຈ້າງວິສະວະກອນ ຮັບຜິດຊອບແຜນດັ່ງກ່າວ ໂດຍມີການຕິດຕາມ ກວດກາການຮັບປະກັນຄຸນນະພາບ ແລະ ການຄວບຄຸມຄຸນນະພາບ ໃນການຈັດຕັ້ງປະຕິບັດການກໍ່ສ້າງຕາມການອອກແບບ ເພື່ອຮັບປະກັນຄຸນນະພາບການກໍ່ສ້າງ ແລະ ໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ.

ໃນການດຳເນີນການຕິດຕາມ ກວດກາ ຄຸນນະພາບການກໍ່ສ້າງ ຜູ້ພັດທະນາເຂື່ອນ ຕ້ອງຢັ້ງຢືນຜົນສຳເລັດການກວດກາຄຸນນະພາບການກໍ່ສ້າງ ເປັນລາຍລັກອັກສອນ ແລະ ສົ່ງໃຫ້ຂະແໜງການທີ່ກ່ຽວຂ້ອງເປັນແຕ່ລະໄລຍະ ເພື່ອເກັບຮັກສາໄວ້.

ລາຍລະອຽດກ່ຽວກັບການຄຸ້ມຄອງຄຸນນະພາບການກໍ່ສ້າງເຂື່ອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 24 ໜ້າວຽກທີ່ຕ້ອງສຳເລັດ ກ່ອນການກັກເກັບນ້ຳ**

ຜູ້ພັດທະນາເຂື່ອນ ຕ້ອງສຳເລັດໜ້າວຽກ ກ່ອນການກັກເກັບນ້ຳຕາມແຕ່ລະກໍລະນີ ດັ່ງນີ້:

1. ການກໍ່ສ້າງເຂື່ອນ;
2. ການອະນາໄມອ່າງກັກເກັບນ້ຳ;
3. ການຍົກຍ້າຍ, ຈັດສັນບ່ອນຢູ່ ແລະ ບ່ອນທຳການຜະລິດ ໃຫ້ປະຊາຊົນທີ່ອາໄສຢູ່ເຂດອ່າງເກັບນ້ຳ;
4. ການຝຶກອົບຮົມໃຫ້ພະນັກງານທີ່ຮັບຜິດຊອບການດຳເນີນງານຂອງເຂື່ອນ;
5. ການກວດກາຄວາມພ້ອມກ່ອນການກັກເກັບນ້ຳ;
6. ການສ້າງລະບົບຕິດຕໍ່ພົວພັນ ລະຫວ່າງພາກສ່ວນທີ່ກ່ຽວຂ້ອງ;
7. ແຜນຮັບມືສຸກເສີນສຳລັບການກັກເກັບນ້ຳຖືກຮັບຮອງ;
8. ການສ້າງ ແລະ ປັບປຸງໂຄງລ່າງພື້ນຖານ ທີ່ໄດ້ຮັບຜົນກະທົບ.

**ມາດຕາ 25 ການອະນຸຍາດກັກເກັບນ້ຳ**

ພາຍຫຼັງຜູ້ພັດທະນາເຂື່ອນໄດ້ສຳເລັດໜ້າວຽກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້ ໃຫ້ຜູ້ພັດທະນາເຂື່ອນ ຍື່ນຄຳຮ້ອງຂໍອະນຸຍາດກັກເກັບນ້ຳພ້ອມດ້ວຍເອກະສານໃຫ້ຂະແໜງການທີ່ກ່ຽວຂ້ອງ ຕາມລະບຽບການ.

ຂະແໜງການທີ່ກ່ຽວຂ້ອງ ພິຈາລະນາອະນຸຍາດກັກເກັບນ້ຳບົນພື້ນຖານການປະເມີນທາງດ້ານເຕັກນິກ ແລະ ດ້ານອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ໃບຢັ້ງຢືນດ້ານເຕັກນິກ, ໃບຢັ້ງຢືນດ້ານສິ່ງແວດລ້ອມ.

**ມາດຕາ 26 ການກັກເກັບນ້ຳ**

ໃນການກັກເກັບນ້ຳ ໃຫ້ຜູ້ພັດທະນາເຂື່ອນ ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ແຈ້ງການກ່ຽວກັບການເລີ່ມຕົ້ນກັກເກັບນ້ຳຕົວຈິງ ໄປຍັງຂະແໜງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ປະຊາຊົນຜູ້ຈະໄດ້ຮັບຜົນກະທົບ;
2. ສ້າງລະບຽບການກ່ຽວກັບຂັ້ນຕອນການກັກເກັບນ້ຳ;
3. ສ້າງແຜນການຕິດຕາມ ກວດກາ, ການເຝົ້າລະວັງ ເປັນແຕ່ລະໄລຍະ.

ລາຍລະອຽດ ກ່ຽວກັບຂັ້ນຕອນການກັກເກັບນ້ຳ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 27 ການຕິດຕາມ ກວດກາ ໃນໄລຍະການກັກເກັບນ້ຳ ແລະ ຫຼັງການກັກເກັບນ້ຳ**

ໃນການຕິດຕາມ ກວດກາ ໃນໄລຍະການກັກເກັບນ້ຳ ໃຫ້ຜູ້ພັດທະນາເຂື່ອນ ເຝົ້າລະວັງ ແລະ ຕິດ ຕາມການກັກເກັບນ້ຳເຂົ້າອ່າງ ຢ່າງໃກ້ຊິດຕະຫຼອດ ຊາວສີ່ຊົ່ວໂມງ ພ້ອມທັງປະເມີນສະພາບໂຕເຂື່ອນ ແລະ ຮາກຖານຂອງເຂື່ອນ ຫຼັງການກັກເກັບນ້ຳເຂົ້າໃນອ່າງ ໂດຍມີການບັນທຶກລະອຽດເຂົ້າໃນບົດລາຍງານການກັກເກັບນ້ຳ.

ໃນກໍລະນີ ດຳເນີນການກັກເກັບນ້ຳໄປແລ້ວ ຫາກພົບວ່າມີຄວາມສ່ຽງ ຜູ້ພັດທະນາຕ້ອງຢຸດເຊົາການເກັບນ້ຳໃນທັນທີທັນໃດ ແລະ ລະບາຍນ້ຳອອກໃນທັນທີ ພ້ອມທັງຫາວິທີການແກ້ໄຂໂດຍດ່ວນ.

ລາຍລະອຽດກ່ຽວກັບ ການຕິດຕາມ ກວດກາ ໃນໄລຍະການກັກເກັບນ້ຳ ແລະ ຫຼັງການກັກເກັບນ້ຳ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 28 ການລາຍງານໃນໄລຍະການກັກເກັບນ້ຳ**

ໃນໄລຍະການກັກເກັບນ້ຳ ໃຫ້ຜູ້ພັດທະນາເຂື່ອນ ລາຍງານໃຫ້ຂະແໜງການແລະອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງດັ່ງນີ້:

1. ຂໍ້ມູນນ້ຳ, ສະພາບໂຕເຂື່ອນ ລວມທັງຄູກັນນ້ຳ, ຮາກຖານໂຕເຂື່ອນ ແລະ ພາກສ່ວນຕ່າງໆຂອງເຂື່ອນ ຢ່າງເປັນປົກກະຕິຕໍ່ເນື່ອງ;
2. ການຕິດຕາມ ກວດກາ ຄວາມປອດໄພຂອງເຂື່ອນ ໃນໄລຍະກ່ອນການກັກເກັບນ້ຳ, ການກັກເກັບນ້ຳຕົວຈິງ ແລະ ຫຼັງການກັກເກັບນ້ຳ;
3. ເຫດການທີ່ເກີດຂຶ້ນ ຢູ່ພາກສະໜາມ ທີ່ເຫັນວ່າ ຜິດປົກກະຕິ, ມີຄວາມສ່ຽງ ລວມທັງອຸບປະຕິເຫດທີ່ເກີດຂຶ້ນ ຢ່າງທັນການ ພ້ອມທັງວິທີການແກ້ໄຂທີ່ເໝາະສົມຕາມແຕ່ລະກໍລະນີໂດຍດ່ວນ.

ລາຍລະອຽດກ່ຽວກັບການລາຍງານໃນໄລຍະການກັກເກັບນ້ຳ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ໝວດທີ 4**

**ການດຳເນີນງານຂອງເຂື່ອນ**

**ມາດຕາ 29 ໜ້າວຽກທີ່ຕ້ອງສຳເລັດກ່ອນການດຳເນີນງານຂອງເຂື່ອນ**

ຜູ້ພັດທະນາເຂື່ອນ ຕ້ອງສຳເລັດໜ້າວຽກກ່ອນການດຳເນີນງານ ຕາມແຕ່ລະກໍລະນີ ດັ່ງນີ້:

1. ແຕ່ງຕັ້ງຫົວໜ້າວິສະວະກອນທີ່ຮັບຜິດຊອບໃນການດຳເນີນງານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍສະບັບນີ້;
2. ກໍ່ສ້າງເຂື່ອນ ແລະ ກັກເກັບນ້ຳ ຕາມທີ່ໄດ້ກຳນົດໄວ້ໃນໝວດທີ 3 ພາກທີ III ຂອງກົດໝາຍສະບັບນີ້;
3. ມີລະບຽບການບໍລິຫານຈັດການນ້ຳ ແລະ ແຜນຄຸ້ມຄອງນ້ຳນອງທີ່ຖືກຮັບຮອງໂດຍຂະແໜງ ການທີ່ກ່ຽວຂ້ອງ;
4. ມີແຜນເຝົ້າລະວັງ ແລະ ແຜນການຕິດຕາມ ກວດກາ;
5. ໄດ້ຮັບໃບຢັ້ງຢືນກ່ຽວກັບການສຳເລັດການກໍ່ສ້າງເຂື່ອນ;
6. ມີແຜນຮັບມືສຸກເສີນສຳລັບການດຳເນີນງານຖືກຮັບຮອງ;
7. ແຈ້ງການກ່ຽວກັບການດຳເນີນງານ ໄປຍັງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ລວມທັງປະຊາຊົນຜູ້ໄດ້ຮັບຜົນກະທົບ.

**ມາດຕາ 30 ການດຳເນີນງານຂອງເຂື່ອນ**

ຜູ້ພັດທະນາເຂື່ອນ ຕ້ອງມີຫົວໜ້າວິສະວະກອນທີ່ຮັບຜິດຊອບໃນໄລຍະການດຳເນີນງານຂອງເຂື່ອນແລະຕ້ອງປະຕິບັດຕາມລະບຽບການ ວ່າດ້ວຍຄວາມປອດໄພໃນການດຳເນີນງານ ແລະ ການບຳລຸງຮັກສາ, ຄູ່ມືໃນການດຳເນີນງານ ແລະ ບຳລຸງຮັກສາ, ຄຳແນະນຳວ່າດ້ວຍຄວາມປອດໄພຂອງເຂື່ອນ ແລະ ລາຍງານໃຫ້ຂະແໜງການທີ່ກ່ຽວຂ້ອງ ຕາມລະບຽບການ.

**ມາດຕາ 31 ການຕິດຕາມ ກວດກາ ແລະ ການເຝົ້າລະວັງໃນໄລຍະດຳເນີນງານ**

ຜູ້ພັດທະນາເຂື່ອນຕ້ອງມີແຜນການຕິດຕາມກວດກາແລະການເຝົ້າລະວັງໃນໄລຍະການດຳເນີນງານຂອງເຂື່ອນຢ່າງຮອບດ້ານ ເພື່ອໃຫ້ສາມາດປະເມີນສະພາບຂອງເຂື່ອນ ແລະ ແກ້ໄຂບັນຫາທີ່ອາດເກີດຂຶ້ນ ໄດ້ຢ່າງທັນການ.

ລາຍລະອຽດກ່ຽວກັບ ການຕິດຕາມ ກວດກາ ແລະ ການເຝົ້າລະວັງ ໃນໄລຍະດຳເນີນງານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 32 ການບໍລິຫານຈັດການນ້ຳ ໃນໄລຍະການດຳເນີນງານ**

ຜູ້ພັດທະນາເຂື່ອນ ຕ້ອງມີລະບຽບການກ່ຽວກັບການບໍລິຫານຈັດການນ້ຳ ຕາມແຕ່ລະປະເພດອ່າງ ເກັບນ້ຳຂອງເຂື່ອນ, ມີການແລກປ່ຽນຂໍ້ມູນ ຂ່າວສານ ແລະ ມີການປະສານສົມທົບກັນ ເພື່ອໃຫ້ເກີດຜົນປະໂຫຍດສູງສຸດທາງດ້ານເສດຖະກິດ ໃນໄລຍະການດຳເນີນງານຂອງເຂື່ອນ ແລະ ການຄຸ້ມຄອງຄວາມປອດໄພຂອງເຂື່ອນ.

ໃນການບໍລິຫານຈັດການນ້ຳ ຜູ້ພັດທະນາເຂື່ອນ ຕ້ອງຄວບຄຸມນ້ຳນອງ, ສະໜອງນ້ຳ, ປ້ອງກັນໄພແຫ້ງແລ້ງ, ຄວບຄຸມຄຸນນະພາບນ້ຳ, ແຈ້ງການລ່ວງໜ້າ ກ່ຽວກັບການກັກເກັບນ້ຳ ແລະ ການປ່ອຍນ້ຳ ໄປຍັງຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ, ຜູ້ພັດທະນາເຂື່ອນທີ່ຢູ່ຕອນລຸ່ມຂອງສາຍນ້ຳດຽວກັນ ແລະ ປະຊາ ຊົນຜູ້ທີ່ຢູ່ຕອນລຸ່ມຂອງສາຍນ້ຳດັ່ງກ່າວຢ່າງທັນການ ເພື່ອຫຼຸດຜ່ອນຜົນກະທົບທີ່ອາດເກີດຂຶ້ນ.

**ມາດຕາ 33 ການຢຸດເຊົາການດຳເນີນງານ**

ການດຳເນີນງານຂອງເຂື່ອນ ຈະຖືກຢຸດເຊົາ ຕາມແຕ່ລະກໍລະນີ ດັ່ງນີ້:

1. ເຂື່ອນບໍ່ຮັບປະກັນດ້ານຄວາມປອດໄພ;
2. ເຂື່ອນສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ຢ່າງຮ້າຍແຮງ;
3. ຜູ້ພັດທະນາເຂື່ອນ ບໍ່ສາມາດສ້ອມແປງ ຫຼື ຟື້ນຟູເຂື່ອນທີ່ໄດ້ຮັບຄວາມເສຍຫາຍຈາກເຫດສຸດວິໄສ;
4. ເຂື່ອນທີ່ບໍ່ສາມາດນຳໃຊ້ຕໍ່ໄປໄດ້.

ສຳລັບການຢຸດເຊົາການດຳເນີນງານຂອງເຂື່ອນໃນກໍລະນີທີ 1 ຫາ 3 ໃຫ້ຂະແໜງການທີ່ກ່ຽວຂ້ອງ ເປັນຜູ້ອອກຄຳສັ່ງໃຫ້ຢຸດເຊົາການດຳເນີນງານຂອງເຂື່ອນ ຕາມລະບຽບການ.

ໃນການຢຸດເຊົາການດຳເນີນງານເຂື່ອນ ທຸກກໍລະນີໃຫ້ຜູ້ພັດທະນາເຂື່ອນ ແຈ້ງຫາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງເປັນລາຍລັກອັກສອນ ເພື່ອພິຈາລະນາ ແລະ ກຳນົດວິທີການ ຫຼຸດຜ່ອນຜົນກະທົບທີ່ອາດເກີດຂຶ້ນ.

**ມາດຕາ 34 ການເຂົ້າເຖິງເຂື່ອນ**

ຜູ້ພັດທະນາເຂື່ອນ ຕ້ອງສົມທົບກັບຂະແໜງການທີ່ກ່ຽວຂ້ອງໃນການວາງແຜນ, ອອກແບບ, ກໍ່ສ້າງ ແລະ ສ້ອມແປງເສັ້ນທາງ, ທາງເຮືອ ຫຼື ສະຖານທີ່ຈອດເຮືອບິນ ໃຫ້ຢູ່ໃນສະພາບທີ່ດີ ແລະ ສາມາດໃຊ້ງານສຳລັບການເຂົ້າເຖິງເຂື່ອນ ແລະ ພາກສ່ວນຕ່າງໆຂອງເຂື່ອນ ໄດ້ໃນທຸກກໍລະນີ ຕະຫຼອດອາຍຸການນຳໃຊ້ງານຂອງເຂື່ອນ.

ອ່ານຕໍ່ສະບັບໜ້າ




# ເຊີດຊູມູນເຊື້ອດຸໝັ່ນຂະຫຍັນພຽນ

\# ດົ້ນກິບເມກ



ນິໄສຂີ້ຄ້ານມັກງ່າຍ ມັນຕິດໂຕຄົນເຮົາມາໂດຍທຳມະຊາດ ແລະ ເກີດຈາກປັດໄຈພາຍນອກອ້ອມຂ້າງ ທີ່ພາໃຫ້ຄົນທີ່ເສບຂ່າວ ຫຼື ຮູ້ເຫັນສິ່ງແວດລ້ອມທາງສັງຄົມທີ່ທັນສະໄໝ ຈຶ່ງເກີດຂີ້ຄ້ານມັກງ່າຍ-ມັກສະບາຍ ລະຖິ້ມມູນເຊື້ອດຸໝັ່ນ ປູກກິນເພິ່ງຕົນເອງ, ເສີມຂະຫຍາຍແນວພືດພັນປູກ ແລ້ວຫັນໄປຄິດເພິ່ງ ວັດຖຸພາຍນອກ-ໄກໂຕ ຄາດຫວັງເປັນສ່ວນໃຫຍ່ ແລະ ສ້າງພາບພົດອວດອ້າງກັນ.

ຜູ້ຂຽນຂໍຍົກຕົວຢ່າງ ວິຖີຊີວິດ ປູ່-ຍ່າ ພໍ່ແມ່ ເວລາເຮັດນາ-ເຮັດໄຮ່ສວນແລ້ວເພິ່ນຈະເກັບເອົາແນວພືດທີ່ປູກກິນໄວ້ໃນເລົ້າເຂົ້າ, ເລົ້າເຂົ້າບໍ່ແມ່ນເຮັດໄວ້ເກັບເຂົ້າຢ່າງດຽວ ມັນເຮັດໜ້າທີ່ເກັບແນວປູກພືດພັນຕ່າງໆເຊັ່ນ ເມັດສາລີ ຫຼື ແກ່ນພືດຜັກຕ່າງໆ ມູນເຊື້ອແບບນີ້ສູນຫາຍໄປ-ເລົ້າເຂົ້າສູນຫາຍຕາມການເວລາ, ຄວາມຈິງປັດຈຸບັນນີ້ມີກະແສໂລກາພິວັດຫຼາຍຢ່າງທີ່ເຮັດໃຫ້ຫຼາຍຄົນຫຼົງລືມຮາກເຫງົ້າທີ່ມາຂອງຕົນ, ຫຼົງລືມພືດຜັກຕົ້ນໄມ້ໃບຫຍ້າທີ່ເຄີຍປູກກິນປູກໃຊ້ ເປັນຢາໃນຊີວິດປະຈຳວັນ.

ຜູ້ຂຽນຍົກຕົວຢ່າງຕື່ມເທົ່າທີ່ເຫັນມາ ເວລາໄດ້ມີໂອກາດໄປຕ່າງແຂວງ ຫຼື ບາງເຂດບາງແຫ່ງ ຊາວບ້ານບາງຄົນ ຄ້ານປູກກ້ວຍ-ປູກອ້ອຍ ຫຼື ໝາກຫຸ່ງຕຳກິນເຊົ້າແລງ ແຕ່ເວລາເຫັນຄົນອື່ນປູກ ໄດ້ແຕ່ແນມເບິ່ງ ເວລາເກີດໝາກຜົນອອກມາ ຄິດແຕ່ຂໍເຂົາກິນ ເອົາອາຫານທີ່ເພິ່ງຄົນອື່ນ ແລ້ວເຮົາຈະເປັນຕົວເອງໄດ້ແນວໃດ? ຍາມໃດກໍມີແຕ່ຂໍເຂົາ, ຂີງ-ຂ່າ, ຫົວສີໄຄ, ໃບອີ່ຕູ່ ສິ່ງທີ່ຕົນເອງສາມາດປູກກິນໄດ້ ແຕ່ບໍ່ລົງມືປູກ ເພາະນິໄສຂີ້ຄ້ານມັກງ່າຍ ມັກສະບາຍ ສຸດທ້າຍທຸກພາຍຫຼັງ.

ຜູ້ຂຽນເຫັນວ່າ: ມູນເຊື້ອດຸໝັ່ນ, ເພິ່ງຕົນເອງ, ເຮັດເປັນຕົວຢ່າງແກ່ລູກຫຼານ ທຳລາຍນິໄສຂີ້ຄ້ານມັກງ່າຍ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ຕ້ອງເລີ່ມທີ່ການສ້າງນິໄສດຸໝັ່ນໃຫ້ເຮົາເອງ-ເພິ່ງຕົນເອງມີສັກສີ ດີກວ່າຈະຫຽວແຕ່ຂໍຄົນອື່ນເຂົາກິນ!



## ຂຽນຄໍາລາວໃຫ້ຖືກ

\#ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ເສົາວ່າງແຂນ | ~~ເສົ່າອ່າງແຂນ~~ |
| ຂວ້ານນ້ຳ | ~~ຂ້ອານນ້ຳ~~ |
| ຂວ້ຳຈອກ | ~~ຂ້ອມຈອກ~~ |
| ໄຂວ່ຂືນ | ~~ໄຂ່ອຂືນ~~ |
| ຄວັນໄຟ | ~~ຄ້ອນໄຟ~~ |
| ຄວ່າງຄ້ອນ | ~~ຄ່ອາງຄ້ອນ, ຄ່ອງຄ້ອນ~~ |
| ນັບບໍ່ໄຄວ່ | ~~ນັບບໍ່ໄຄ່ອ~~ |
| ນ້ຳຖ້ວມ | ~~ນ້ຳຖອ້ມ~~ |
| ອວ່າຍໜ້າ | ~~ອ່ອາຍໜ້າ, ອ່ອຍໜ້າ~~ |

# ວັນຄູແຫ່ງຊາດ

ໂດຍ: ດອກຫຍ້າ

ມວນມະນຸດທີ່ຢູ່ໃນໂລກນີ້ ລ້ວນແຕ່ມີການພັດທະນາຕົນເອງໃຫ້ມີຄວາມກ້າວໜ້າໄປຢ່າງບໍ່ຢຸດຢັ້ງ ອັນເຮັດໃຫ້ສັງຄົມມະນຸດມີການປ່ຽນຈາກລະບອບນີ້ ໄປສູ່ລະບອບສັງຄົມອື່ນ ເຊິ່ງໃນຂະບວນວິວັດພັດທະນາການເຫຼົ່ານັ້ນ ລ້ວນແຕ່ມີຄູເປັນບົດບາດປະກອບສ່ວນອັນສຳຄັນ ເຊິ່ງບໍ່ມີໃຜ ຫຼື ບຸກຄົນໃດຈະປະຕິເສດໄດ້; ສະນັ້ນ, ໃນບົດຄວາມນີ້ເຮົາຈະໃຫ້ທ່ານຮູ້ຮັບຮູ້ກ່ຽວກັບວັນຄູແຫ່ງຊາດ.

ຄຳວ່າ ຄູ ແມ່ນຄຳເວົ້າທີ່ສືບທອດກັນຫຼາຍເຊັ່ນຄົນ ຄູໝາຍເຖິງຄົນທີ່ມີຄວາມຮູ້, ຄວາມສາມາດ ແລະ ປະສົບການທີ່ສາມາດໄປຖ່າຍທອດຄວາມຮູ້, ຄວາມສາມາດ ແລະ ປະສົບການນັ້ນໄປສູ່ຜູ້ອື່ນໂດຍຮູບແບບການຖ່າຍທອດຄວາມຮູ້ຈາກຜູ້ຮູ້ໄປສູ່ຜູ້ບໍ່ຮູ້ ເອີ້ນວ່າ: ການຮຽນ-ການສອນ; ສຳລັບປະເທດລາວເຮົາ ເມື່ອເວົ້າເຖິງການຮຽນ-ການສອນ ຫຼື ເວົ້າລວມແມ່ນການສຶກສາ ຖ້າຈະປຽບທຽບກັບການຂະຫຍາຍຕົວຂອງໂລກ ພວກເຮົາຍັງຢູ່ຫ່າງໄກຈາກໂລກຫຼາຍ.

ການສຶກສາຂອງລາວເຮົາແມ່ນເລີ່ມໃນສະຕະວັດທີ XIV ພາຍຫຼັງທີ່ເຈົ້າຟ້າງຸ່ມ ກະສັດອົງທຳອິດຂອງລາວ ໄດ້ນຳເອົາສາສະໜາພຸດເຂົ້າມາເຜີຍແຜ່ ຈຶ່ງເຮັດໃຫ້ປະເທດເຮົາມີວັດວາອາຮາມ ເຊິ່ງຖືວ່າເປັນໂຮງຮຽນແຫ່ງທຳອິດຂອງປະຊາຊົນລາວ ອາດເວົ້າໄດ້ວ່າ ອິດທິພົນທາງສາສະໜາ ໄດ້ສິ່ງຜົນສະທ້ອນເຖິງປະຊາຊົນລາວຫຼາຍທີ່ສຸດ ແລະ ແກ່ຍາວມາເປັນເວລາຫຼາຍຮ້ອຍປີ ເຊິ່ງໃນເບື້ອງຕົ້ນ ພໍ່ແມ່ເປັນຄູເພື່ອສິດສອນລູກຂອງຕົນຢູ່ໃນຄອບຄົວ ໂດຍເອົາປະສົບການຂອງຕົນໃນຊີວິດປະຈຳວັນ, ຂະນົບທຳນຽມຮີດຄອງປະເພນີ, ຄວາມເຊື່ອຖື ມາເປັນການສຶກສາອົບຮົມລູກຫຼານຂອງຕົນ ເພື່ອໃຫ້ຮູ້ຈັກອອກແຮງງານ ແລະ ກາຍເປັນຜູ້ສືບທອດທີ່ບໍລິສຸດຂອງພໍ່ແມ່ຕາມຄວາມເຊື່ອຖື ແລະ ເປົ້າໝາຍສູງໄປກວ່ານັ້ນ ແມ່ນສົ່ງລູກເຂົ້າໄປບວດ ຫຼື ເປັນສັງກະລີຢູ່ວັດ ເພື່ອຮ່ຳຮຽນຂຽນອ່ານ, ຮຽນຮູ້ຫຼັກວິຊາ ແລະ ລິດເດດມົນຄາຖາຕາມຄວາມເຊື່ອຖື ໂດຍແມ່ນຄູບາອາຈານເປັນຜູ້ສິດສອນ ແລະ ສິ່ງຄວາມຮູ້ເຊັ່ນ: ຈາລິຍະທຳ, ການວາດແຕ້ມ, ການປັ້ນ, ການຄວັດລະບາຍສີ, ຢາພື້ນເມືອງ, ວິຊາອາຄົມ ຕະຫຼອດເຖິງລະບຽບວິໄນຄຳສອນຕ່າງໆຂອງພະພຸດທະເຈົ້າ ໃນຮູບແບບການຮຽນ- ການສອນຢູ່ວັດໃນເວລານັ້ນ ໂດຍຖືເອົາຂັ້ນຈາກການບວດມາເປັນການຕີເປັນລາຄາ ເຖິງລະດັບຄວາມຮູ້ ສະຫຼຸບລວມແລ້ວ ການສຶກສາລາວໃນສະໄໝນັ້ນ ມີສາມຮູບແບບຕົ້ນຕໍ ຄື: ການສຶກສາໃນຄອບຄົວ, ການສຶກສາໃນວັດ ແລະ ການສຶກສາໃນລາດຊະສຳນັກ.

ໄລຍະທີ່ຈັກກະພັດຕ່າງດ້າວເຂົ້າມາຮຸກຮານລາວ ໃນຊ່ວງປີ 1893-1954 ການສຶກສາລາວພາຍໃຕ້ການປົກຄອງຂອງຈັກກະພັດຕ່າງດ້າວ ແມ່ນການສຶກສາທີ່ມີເນື້ອໃນກ່ຽວກັບວັດທະນະທຳ ແລະ ສັງຄົມແບບບູຊາຊາວຕາເວັນຕົກ ເພື່ອຮັບໃຊ້ແນວທາງນະໂຍບາຍລ່າເມືອງຂຶ້ນຂອງພວກເຂົາ, ພວກເຂົາໄດ້ຈຳກັດຮັດແຄບການສຶກສາລາວ ດ້ວຍການສະກັດກັ້ນບໍ່ໃຫ້ເຍົາວະຊົນລາວເຂົ້າຮ່ຳຮຽນຢູ່ວັດ; ພ້ອມດຽວກັນນັ້ນ, ກໍຂະຫຍາຍໂຮງຮຽນແບບຕາເວັນຕົກຂອງພວກເຂົາຢູ່ບາງຕົວເມືອງໃຫຍ່ ເພື່ອສອນສະເພາະແຕ່ລູກຫຼານບຸກຄົນສຳຄັນຂອງຊົນຊັ້ນປົກຄອງ ແລະ ຊາວຕ່າງປະເທດເທົ່ານັ້ນ; ມາເຖິງໄລຍະປີ 1956-1942 ການສຶກສາລາວກໍໄດ້ມີການພັດທະນາ ແລະ ຂະຫຍາຍຕົວໄປຕາມທ່າອ່ຽງ ແລະ ຄວາມຕ້ອງການຂອງປະເທດຊາດ ໂດຍໄດ້ມີການປະຕິວັດການສຶກສາຄັ້ງຍິ່ງໃຫຍ່ ໂດຍໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫຼືອຈາກອົງການອຸຍແນັດສະໂກ. ການສຶກສາລາວທີ່ມີລັກສະນະຊາດ ແລະ ໃຊ້ພາສາລາວເຂົ້າສອນໃນທຸກວິຊາ ແລະ ຊັ້ນຮຽນ ໄດ້ເລີ່ມປາກົດອອກໃນນະໂຍບາຍການສຶກສາໃນໄລຍະນີ້.

ພາຍຫຼັງປະຊາຊົນລາວລຸກຮື້ຂຶ້ນຍຶດອຳນາດ ໃນວັນທີ 12 ຕຸລາ 1945 ເປັນຕົ້ນມາ ການສຶກສາລັກສະນະຊາດ, ວິທະຍາສາດ ແລະ ມະຫາຊົນ ຈຶ່ງຄ່ອຍໆປະກົດຕົວເປັນຮູບເປັນຮ່າງຂຶ້ນມາ; ການຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າ ເພື່ອຕ້ານກັບລັດທິລ່າເມືອງຂຶ້ນແບບໃໝ່ ຂອງຈັກກະພັດຜູ້ຮຸກຮານ ໄດ້ຮັບໄຊຊະນະ ແລະ ໄດ້ຮັບການສະຖາປານາຂຶ້ນເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975 ເຫດການປະຫວັດສາດດັ່ງກ່າວ ກໍໄດ້ເປັນເງື່ອນໄຂເອື້ອອຳນວຍໃຫ້ແກ່ການສຶກສາຂອງລາວໄດ້ຮັບການພັດທະນາ, ໂຮງຮຽນໄດ້ຂະຫຍາຍຕົວຢ່າງໄວວາຈາກຕົວເມືອງໄປສູ່ຊົນນະບົດ; ລູກຫຼານຂອງປະຊາຊົນບັນດາເຜົ່າ ໄດ້ເຂົ້າຮ່ຳຮຽນຢູ່ໂຮງຮຽນ ໂດຍຄູທີ່ມີນ້ຳໃຈຮັກຫອມປະເທດຊາດ, ມີຄວາມຮູ້, ຄວາມສາມາດ ເພື່ອປະກອບສ່ວນກໍ່ສ້າງປະເທດຊາດ ນຳເອົາຄວາມສົມບູນພູນສຸກມາສູ່ປະຊາຊົນບັນດາເຜົ່າ.

ດັ່ງນັ້ນ, ເພື່ອລະນຶກເຖິງຄຸນງາມຄວາມດີຂອງຄູ ໃນສັງຄົມ ຈຶ່ງໄດ້ມີການກຳນົດໃຫ້ມີວັນຄູແຫ່ງຊາດ ໂດຍກຳນົດເອົາວັນເຂົ້າເປັນຄູຂອງນາຍຄູຄຳ ເຊິ່ງແມ່ນຄູຜູ້ທີ່ມີສັນຊາດລາວຄົນທຳອິດ ເປັນວັນຄູແຫ່ງຊາດ ໂດຍໄດ້ຖືກປະກາດໃຊ້ຕັ້ງແຕ່ວັນທີ 7 ຕຸລາ 1994 ເປັນຕົ້ນມາ ຈົນເຖິງປັດຈຸບັນ ໂດຍພາຍໃຕ້ການຊີ້ນຳ-ນຳພາຂອງພັກ ໃນທຸກໆປີເມື່ອເຖິງວັນທີ 7 ຕຸລາ ຈະຈັດໃຫ້ມີພິທີການເລົ່າຄືນມູນເຊື້ອວັນຄູແຫ່ງຊາດ ແລະ ອວຍພອນຄູຜູ້ໃຫ້ຄວາມຮູ້ຂຶ້ນໃນທຸກໂຮງຮຽນທົ່ວປະເທດ.




ບູຮານເພິ່ນກ່າວໄວ້ເຕືອນສະຕິ: ເກີດມາເປັນມະນຸດນີ້ ຊາດໃດກໍດີ ຄົນມີໃຫ້ແບ່ງ ແຮງໃຫ້ຊ່ວຍ ປ່ວຍໃຫ້ຊອບ ຂວັນໃຫ້ເອີ້ນກັບ ພຽງຍພາແລງໃຫ້ປຸງແຕ່ງ ໝັ້ນເອີ້ນພີ່ເອີ້ນນ້ອງ ມາເຕົ້າຢ່າລະເລີຍ ເປັນເຂີຍເພິ່ນໃຫ້ຮູ້ຍາດຕາຍາຍ ເປັນນາຍໃຫ້ຮັກລູກນ້ອງ ປົກປ້ອງເຂົາຍາມມີບັນຫາ ຢ່າປ່ອຍປະລະເລີຍລົບເຄີຍຕົວ ຊົ່ວດີໃຫ້ຮີ້ນຕອງ ຄອງຄົນເພິ່ນຄົນໂຕໃຫ້ເຖິງຝັ່ງແລ.



ສຸກສະບາຍກາຍໂຮດ

# ຫົວໃຈວາຍ

#ສາວແອ່ນ



ອາການຫົວໃຈວາຍ ເກີດຈາກການເຮັດວຽກຜິດປົກກະຕິຂອງຫົວໃຈ ເຮັດໃຫ້ບໍ່ສາມາດສູບເລືອດໄປລ້ຽງສ່ວນຕ່າງໆໄດ້ພຽງພໍ ຄວາມຮຸນແຮງມີທັງແບບກະທັນຫັນ ແລະ ຊໍາເຮື້ອ. ດັ່ງນັ້ນ, ສິ່ງສໍາຄັນຄວນຈະສັງເກດອາການ ເພາະຫົວໃຈເປັນອະໄວຍະວະທີ່ຫາກເຈັບປ່ວຍແລ້ວລໍຖ້າບໍ່ໄດ້ ການຮູ້ໄວກໍຈະຊ່ວຍໃຫ້ດູແລຮັກສາໄດ້ຢ່າງຖືກຕ້ອງ ແລະ ຫຼຸດຄວາມສ່ຽງຕໍ່ການເສຍຊີວິດຍ້ອນຫົວໃຈວາຍໄດ້ຫຼາຍຂຶ້ນ.

ພະຍາດຫົວໃຈວາຍ ອາດເກີດໄດ້ຈາກຫຼາຍສາເຫດ ເຊັ່ນ: ເສັ້ນເລືອດຫົວໃຈຕີບ ຫຼື ຕັນແບບກະທັນຫັນ ຈຶ່ງເຮັດໃຫ້ກ້າມເນື້ອຫົວໃຈຕາຍ ສົ່ງຜົນໃຫ້ການບີບໂຕຂອງຫົວໃຈຫຼຸດລົງ; ລີ້ນຫົວໃຈຜິດປົກກະຕິ ເຊັ່ນ: ເສັ້ນເລືອດຫົວໃຈຕີບຮຸນແຮງ ເຮັດໃຫ້ການຮັບ-ສົ່ງເລືອດຂອງຫົວໃຈຫຼຸດລົງ; ກຸ່ມພະຍາດໄທລອຍ ເຊັ່ນ ໄທລອຍເປັນພິດ ແລະ ແມ່ຍິງທີ່ມີອາການມານເປັນພິດ; ສະນັ້ນ, ໃນຄໍລໍາສຸກສະບາຍກາຍໂຮດສະບັບນີ້ ເຮົາມີ 3 ອາການທີ່ອາດຈະເປັນສັນຍານເຕືອນວ່າຫົວໃຈຂອງທ່ານກໍາລັງຈະວາຍ ຫຼື ລົ້ມເຫຼວ ຄື:

**- ເມື່ອຍງ່າຍ:** ອາດຈະບົ່ງບອກວ່າປະສິດທິພາບການເຮັດວຽກຂອງຫົວໃຈໜ້ອຍລົງ ຄວາມຮຸນແຮງຂອງພະຍາດມັກຈະກ່ຽວຂ້ອງກັບກິດຈະກໍາທີ່ເຮັດ ຖ້າທ່ານມີອາການເມື່ອຍຢູ່ຕະຫຼອດເວລາ ນັ້ນອາດໝາຍເຖິງຄວາມຜິດປົກກະຕິທີ່ຮຸນແຮງ.

**- ແສບ, ເຈັບສຽບ ແລະ ແໜ້ນໜ້າເອິກ:** ອາການນີ້ອາດບົ່ງບອກໃຫ້ຮູ້ວ່າ ຫົວໃຈຂາດເລືອດໄປຫຼໍ່ລ້ຽງ ສ່ວນຫຼາຍມັກຈະຮູ້ສຶກແໜ້ນກາງໜ້າເອິກ ອາດຈະມີອາການປວດຈາກຕົ້ນຄໍຂຶ້ນໄປຫາຄາງກະໄຕ, ມີອາການເຄັ່ງໆຕຶງໆ, ມືນຊາ, ແຕ່ບ່າໄຫຼ່ໄປເຖິງຕົ້ນແຂນ ຮູ້ສຶກຄືມີແນວໜັກໆມາເຕັງ ຖ້າອາການເຫຼົ່ານີ້ເປັນດົນກວ່າ 20 ນາທີ ອາດສົ່ງຜົນໃຫ້ກ້າມເນື້ອຫົວໃຈຕາຍ ເຮັດໃຫ້ປະສິດທິພາບຂອງຫົວໃຈຫຼຸດລົງ.

**- ບໍ່ສະບາຍໂຕເວລານອນ:** ຈະຮູ້ສຶກບໍ່ສະບາຍໂຕເວລານອນຫງາຍ ອາດຈະເປັນສັນຍານທີ່ບົ່ງບອກວ່າປະລິມານນໍ້າໃນຫົວໃຈເພີ່ມຂຶ້ນ ຈາກການເຮັດວຽກຂອງຫົວໃຈຜິດປົກກະຕິ ຂ້ອນຂ້າງຮຸນແຮງ.

**ຂໍ້ມູນຈາກ:** www.sanook.com



# ສັບສາຍ ລະບາຍ



*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

✳ **ຊົມເຊີຍ ວັນຄູແຫ່ງຊາດ** ຄົບຮອບ 29 ປີ **(7 ຕຸລາ 1994-7 ຕຸລາ 2023)** ຂ່ອຍຍອບສົ່ງໃຫ້ ຄູທີ່ອາບາ ແດນສາທາເມືອງລາວ ເຂດທາບີແຄ້ອນ **ໜ້າທີ່ການງານກ້າວ** ເຮືອງສີປະກາຍເດັ່ນ ເປັນເບົ້າຫຼອມເລີດລ້ຳ **ນໍາພາສ້າງຊາດປະຊາ** ອາຈີແທບດອກໄມ້ ຫຼາຍຊໍ່ໂຮມຮອມ **ກະວີຈອບຈອບເຖິງ** ສົ່ງຍັງຄູເຈົ້າ ຜູ້ທີ່ເບົ້າດອຍກວ້າງ ວຽງວັງເຮືອງຮຸ່ງ **ໂຊກລາບໄຫຼເຕົ້າ** ໂຮມເຂົ້າແດ່ຄູ **ທ່ານເອີຍ!**

✳ **12** ຕຸລາ **ສາຍາວັນປະກາດເອກະລາດ** ເຖິງແມ່ນເຫດການຈິງຈະຜ່ານພົ້ນໄປ ແຕ່ຫອບໄຟແຫ່ງຄວາມສະຫວ່າງສະໄຫວ ຍັງຮຸ່ງວິໄລທົ່ວແດນສາທາ **12 ຕຸລາ ເວົາອ້າງ** ຜົນງານໃຫຍ່ມີມາ ປວງປະຊາສຸກຂີ ຊື່ນຊົມຍ່ຍ້ອງ **12 ຕຸລາລືກ້ອງ** ສະຫລອງວັນປະຫວັດສາດ ໂລກໂລກາຮັບຮູ້ ວ່າລາວສູ້ຊະນະມານ **ຊອບແລ້ວ!**




# ຄຸນຄູ

**# ບົງເອິນ**

✳ ອາລຸນເຮືອງຮຸ່ງແຈ້ງ
ດວງດອກມອນມາລີ
ສັກກູນາຈາແຈ້ວ
ຊວນໃຫ້ໃຈຊື່ນຊ້ອຍ

ສາດສ່ອງແສງສີ
ເບັ່ງບານເບີຍອ້າ
ແຊວຊົມວັນໃໝ່
ຊະອອນໂອ້ໂອ່ຍນໍາ

✳ ປຽບປານໄວໜຸ່ມນ້ອຍ
ພ້ອມພໍ່ປວງປະຊາ
ບຸນຄຸນຂອງຄູສ້າງ
ຄູເປັນດວງປະທີບໄຕ້

ໃນທີ່ອາບາ ລາວນີ້
ຊື່ນຊົມເຊີຍຍ້ອງ
ເສີມປັນຍາຢູ່ສິ່ງ
ໃຫ້ເຫັນກວ້າງແກ່ວໄກ

✳ໂອກາດວັນຄູລາວດຸ່ງກ້າວ
7 ຕຸລາໃໝ່ມາ
ທົ່ວປວງຊົນຊົມຍ້ອງ
ຊື່ສຽງຄູຟຸ່ງພົ້ນ

ເຂົ້າຕື່ມເຕີມສະໄໝ
ຄ່າຄຸນຄວາມໝາຍກວ້າງ
ສະຫຼອງຊູເສີມສິ່ງ
ຜົນງານສ້າງອະເນກນອງ

✳ ບູຮານວ່າ ຄັນໄດ້ກິນປຽງເຂົ້າ
ຄັນໄດ້ກິນປູປາ
ລ້ຳລອຍມີສຸກລົ້ນ
ມີຊື່ສຽງ ແລະ ຍົດຊັ້ນ

ຢ່າລືມຄ່າຄຸນນາ
ຢ່າລືມຄຸນສາຍນ້ຳ
ຢ່າລືມຄຸນພໍ່ແມ່
ຢ່າຫັນໜ້າໜ່າຍຄູ

✳ ມີຄູ ເຮົາຈຶ່ງມີວັນນີ້
ວິຊາການທໍາກິນ
ຮູ້ຈັກຂາຍຈັກຄ້າ
ມີເງິນທອງຈ່າຍໃຊ້

ມີໜ້າທີ່ການງານ
ອ່ານເປັນຂຽນໄດ້
ພັດທະນາບ້ານຊ່ອງ
ສູງຊັ້ນກຽດສັກສີ

✳ ສິບນິ້ວຮຽງນອບນ້ອມ
ເປັນພໍ່-ແມ່ທີສອງ
ປຽບດັ່ງເຮືອໃນນໍ້າ
ເປັນທອນໄຟສະຫວ່າງແຈ້ງ

ກົ້ມກາບພະຄຸນຄູ
ຊ່ວຍປະຄອງຄອຍສ້າງ
ນໍາພາເຮົາເຖິງຝັ່ງ
ເບິ່ງແຍງໃຫ້ດຸ່ງເດີນ ແທ້ໃດ




# ຊອບຍິ້ມ

**# ແອ່ນຕຸ້ງ**

**ເທວະດາ**

ໃນຂະນະທີ່ຊາຍຄົນໜຶ່ງກໍາລັງຍ່າງອອກກໍາລັງກາຍບໍລິເວນເຂດກໍ່ສ້າງຢູ່ນັ້ນ ລາວກໍໄດ້ຍິນສຽງເຕືອນມາຈາກທາງຫຼັງວ່າ:

??? : ຢຸດ! ລະວັງດິນຈີ່ຈະຕົກຖືກຫົວ ຊາຍຄົນນັ້ນຢຸດພໍ່ດີດິນຈີ່ຕົກລົງຕໍ່ໜ້າ ລາວຫຼຽວຫຼັງ ອ້ອມໂຕ ແຕ່ບໍ່ເຫັນໃຜ ລາວຍ່າງຕໍ່ໄປ ແລະ ກໍາລັງຊິຂ້າມທາງ ກໍໄດ້ຍິນສຽງຮ້ອງມາໃສ່ອີກວ່າ

???: ຢຸດ! ລະວັງລົດຊິຕໍາ ຊາຍຄົນນັ້ນຢຸດປຸບ ລົດກໍແລ່ນກາຍໜ້າປັບໂລດ ລາວຫຼຽວອ້ອມຂ້າງ ແຕ່ບໍ່ມີໃຜ ລາວເລີຍຮ້ອງຖາມວ່າ:

**ຊາຍຄົນນັ້ນ:** ເຈົ້າແມ່ນໃຜ?

??? : ຂ້ອຍແມ່ນເທວະດາ ທີ່ຄອຍປົກປ້ອງເຈົ້າ

ຊາຍຄົນນັ້ນຈຶ່ງຮ້ອງຖາມ ດ້ວຍຄວາມຢາກຮ້າຍວ່າ

**ຊາຍຄົນນັ້ນ:** ເປັນຫຍັງເວລາຊິແຕ່ງງານຄືບໍ່ມາເຕືອນກູແດ່ ບັກເທວະດາ ??? :‼



**ຄະຕິເຕືອນໃຈ**

**#ດອກຫຍ້າ**

ຄໍາພີ່ເຈັບຕ້ອງ
ຄໍານ້ອງເຈັບໃຈ
ມີອັນໃດໂຕ້ຄອຍເອົາ
ທາງແກ້ທາງຊີເຫັນ




# ວິນິດໄສ - ພິຈາລະນາ

"ວິນິດໄສ" ແລະ "ພິຈາລະນາ" ເປັນສອງຄຳທີ່ມີຄວາມໝາຍໃກ້ຄຽງ ແຕ່ໃຊ້ຕ່າງກັນ ດັ່ງນີ້:

"ວິນິດໄສ" ເປັນຄຳຈາກເຄົ້າປາລີ Vinicchaya (ວິນິຈສະຍະ) ເຊິ່ງແປວ່າ "ການຕັດສິນ ການຊີ້ຂາດ". ລາວເຮົາໃຊ້ຄຳນີ້ເປັນຄຳກິລິຍາ ໝາຍເຖິງ "ໃຊ້ຄວາມຮູ້ ແລະ ວິຈາລະນະຍານພິຈາລະນາຕັດສິນຊີ້ຂາດ ຫຼື ຕັດສິນຊີ້ຂາດດ້ວຍການໃຊ້ຄວາມຮູ້ພິຈາລະນາ" ເຊັ່ນ

- ຄະນະກຳມະການໄດ້ວິນິດໄສວິທະຍານິພົນບົດນີ້ໃຫ້ຜ່ານ ໂດຍມີເງື່ອນໄຂຜູ້ສຶກສາຕ້ອງໄດ້ໄປແປງຕາມຄຳເຫັນຂອງຄະນະກຳມະການວິນິດໄສບົດ.
- ຜ່ານການກວດສອບ ແລະ ວິນິດໄສ ຈາກອົງການອະນາໄມໂລກ ໄດ້ອອກມາຢືນຢັນວ່າ ວັກຊີນຊະນິດນີ້ ສາມາດໃຊ້ໄດ້ຢ່າງປອດໄພ.
- ກ່ອນຕັດສິນຄະດີ ຜູ້ພິພາກສາຕ້ອງວິນິດໄສໂດຍອີງຕາມພະຍານຫຼັກຖານ ແລະ ຂໍ້ເທັດຈິງຕາມທີ່ປາກົດ.
- ການປິ່ນປົວພະຍາດໃນປັດຈຸບັນ ໄດ້ມີການນຳເອົາຄອມພິວເຕີເຂົ້າຊ່ວຍໃນການວິນິດໄສພະຍາດຫຼາຍຂຶ້ນ.

"ພິຈາລະນາ" ເປັນຄຳກິລິຍາຈາກເຄົ້າປາລີ Vicāraṇā (ວິຈາຣະນາ) ເຄົ້າສັນສະກິດ Vicāraṇā विचारणा (ວິຈາຣະນາ) ແລ້ວແປງສຽງ ວ ເປັນ ພ ກາຍເປັນ "ພິຈາລະນາ" ໝາຍເຖິງ "ເບິ່ງຢ່າງລະອຽດຖີ່ຖ້ວນ, ໃຊ້ປັນຍາໄຕ່ຕອງຢ່າງລະອຽດ" ເຊັ່ນ

- ພວກເຮົາໄດ້ເຮັດໜັງສືສະເໜີຂຶ້ນຂັ້ນເທິງເພື່ອໃຫ້ເພິ່ນພິຈາລະນາ.
- ສະພາແຫ່ງຊາດ ພິຈາລະນາຮ່າງກົດໝາຍວ່າດ້ວຍອົງການໄອຍະການທະຫານ.
- ເຮັດອັນໃດອັນໃດເພື່ອຫຼີກລ່ຽງຄວາມຜິດພາດເຮົາຕ້ອງພິຈາລະນາຢ່າງຮອບຄອບ.
- ສະມາຊິກສະພາແຫ່ງຊາດ ພິຈາລະນາປະກອບຄຳເຫັນໃສ່ການປັບປຸງກົດໝາຍວ່າດ້ວຍວິສາຫະກິດ.
- ກ່ອນຈະລົງທຶນດຳເນີນກິດຈະການໃດໜຶ່ງ ຜູ້ເຂົ້າຮ່ວມທຶນຕ້ອງໄດ້ພິຈາລະນາຮ່ວມກັນຢ່າງຄັກແນ່ເສຍກ່ອນ.

# ADB ປັບຫຼຸດການຄາດຄະເນເສດຖະກິດປະເທດກຳລັງພັດທະນາໃນອາຊີ




ເມື່ອບໍ່ດົນມານີ້ ໄດ້ມີການລາຍງານຂ່າວໃຫ້ຮູ້ວ່າ: ທະນາຄານເພື່ອການພັດທະນາແຫ່ງອາຊີ (ADB) ໄດ້ປັບຫຼຸດການຄາດຄະເນການຂະຫຍາຍຕົວທາງດ້ານເສດຖະກິດຂອງປະເທດກຳລັງພັດທະນາໃນອາຊີລົງເຫຼືອ 4,7% ໃນປີ 2023 ເພາະອັດຕາດອກເບ້ຍຢູ່ໃນລະຍະຂາຂຶ້ນ ແລະ ບັນຫາອະສັງຫາລິມະຊັບໃນຈີນ.

ການປັບຫຼຸດໂຕເລກການຄາດຄະເນຂອງ ADB ຄັ້ງນີ້ ຕ່ຳກວ່າການຄາດຄະເນໃນເດືອນເມສາຜ່ານມາ ທີ່ຄາດວ່າ GDP ຈະມີການຂະຫຍາຍຕົວ 4,8% ພ້ອມທັງຄາດວ່າການເຕີບໂຕໃນຈີນມີທ່າອ່ຽງຈະຢູ່ທີ່ 4,9% ໃນປີນີ້ ຊ້າກວ່າການຂະຫຍາຍຕົວ 5% ຈາກປີຜ່ານມາ. ADB ຊີ້ໃຫ້ເຫັນວ່າ ຄວາມຕ້ອງການທົ່ວໂລກທີ່ອ່ອນແອລົງ ສົ່ງຜົນໃຫ້ການສົ່ງອອກຕົກຕ່ຳ, ກິດຈະກຳທາງດ້ານເສດຖະກິດໄດ້ຮັບການສະໜັບສະໜູນຈາກການຟື້ນຕົວຂອງການທ່ອງທ່ຽວ ແລະ ຄວາມຕ້ອງການພາຍໃນປະເທດທີ່ແຂງແຮງ. ນອກຈາກນີ້, ADB ຍັງກ່າວເຖິງຄວາມສ່ຽງ 3 ປະການທີ່ມີຕໍ່ທ່າອ່ຽງການຂະຫຍາຍຕົວຂອງເສດຖະກິດ ໄດ້ແກ່ຜົນກະທົບຂອງຄວາມອ່ອນແອໃນພາກອະສັງຫາລິມະຊັບຂອງຈີນ, ການຍຸດສະງັກຂອງການສະໜອງເປັນໄລຍະໆຂອງຣັດເຊຍ ແລະ ການຄວບຄຸມການສົ່ງອອກທ່າມກາງຄວາມສ່ຽງຂອງໄພແຫ້ງແລ້ງ ແລະ ນ້ຳຖ້ວມທີ່ເກີດຈາກແອວນີໂຍ. ທ່ານ ອັນເບີດ ພຣາກ ຫົວໜ້ານັກເສດຖະສາດຂອງ ADB ກ່າວວ່າ: ການພັດທະນາໃນອາຊີຍັງຄົງຂະຫຍາຍຕົວຢ່າງແຂງແຮງ ແລະ ແຮງກົດດັນດ້ານເງິນເຟີ້ກໍຫຼຸດລົງ ທະນາຄານກາງບາງແຫ່ງໃນພາກພື້ນເລີ່ມຫຼຸດອັດຕາດອກເບ້ຍລົງ ເຊິ່ງຈະຊ່ວຍກະຕຸ້ນການເຕີບໂຕໄດ້ເປັນຢ່າງດີ.

ນອກຈາກນີ້, ADB ຍັງປັບຫຼຸດການຄາດຄະເນການຂະຫຍາຍຕົວຂອງອິນເດຍລົງເຫຼືອ 6,3% ຈາກ 6,4% ເນື່ອງຈາກການລົງທຶນພາກລັດໃນອິນເດຍຍັງຄົງແຂງແຮງ ແລະ ຈະຍັງຄົງຂັບເຄື່ອນການເຕີບໂຕຕໍ່ໄປ ສ່ວນຄວາມຕ້ອງການໃນປະເທດກໍມີຄວາມແຂງແຮງ ເຊັ່ນດຽວກັບປະເທດອື່ນໆໃນພາກພື້ນ. ທັງນີ້, ADB ຍັງຊີ້ໃຫ້ເຫັນວ່າ ອັດຕາເງິນເຟີ້ໃນປະເທດກຳລັງພັດທະນາໃນອາຊີ ແລະ ປາຊີຟິກຈະຫຼຸດລົງເຫຼືອ 3,6% ໃນປີ 2023 ຫຼຸດລົງຈາກການຄາດຄະເນກ່ອນໜ້ານີ້ 4,2% ພ້ອມທັງຄາດຄະເນວ່າ ອັດຕາເງິນເຟີ້ໃນປີ 2024 ຈະເພີ່ມຂຶ້ນ 3,5%.

# ກຳປູເຈຍ ຕັ້ງເປົ້າໝາຍເປັນປະເທດທີ່ມີລາຍໄດ້ສູງພາຍໃນປີ 2050



ອີງຕາມການລາຍງານຂ່າວ ໃຫ້ຮູ້ວ່າ: ໃນວັນທີ 25 ກັນຍາຜ່ານມາ, ລັດຖະບານກຳປູເຈຍໄດ້ເປີດເຜີຍຖະແຫຼງການແຜນຍຸດທະສາດ ເພື່ອປ່ຽນສະຖານະໃຫ້ເປັນປະເທດທີ່ມີລາຍໄດ້ສູງພາຍ ໃນປີ 2050.

ຖະແຫຼງການລະບຸວ່າ: ເຊັ່ນດຽວກັບປະເທດກຳລັງພັດທະນາອື່ນໆ ກຳປູເຈຍຍັງຄົງມີຫຼາຍສິ່ງຫຼາຍຢ່າງທີ່ຕ້ອງເຮັດ ເພື່ອບັນລຸເປົ້າໝາຍການເປັນປະເທດທີ່ມີລາຍໄດ້ປານກາງລະດັບສູງພາຍໃນປີ 2050. ຂະນະດຽວກັນ, ກຳປູເຈຍມຸ່ງເນັ້ນທີ່ຈະເປັນປະເທດທີ່ມີລາຍໄດ້ສູງ, ມີຊີວິດຊີວາ ແລະ ຈະເລີນຮຸ່ງເຮືອງ ໃນປີ 2050.

ເພື່ອບັນລຸຈຸດປະສົງດັ່ງກ່າວ ລັດຖະບານກຳປູເຈຍ ຈຶ່ງມຸ່ງເນັ້ນດຳເນີນການເພື່ອປ່ຽນສະຖານະຜ່ານຍຸດທະສາດຫ້າຫຼ່ຽມວ່າດ້ວຍການພັດທະນາເສດຖະກິດ ແລະ ສັງຄົມຂອງກຳປູເຈຍພາຍໃນ 25 ປີຂ້າງໜ້າ. ທັງນີ້, ຍຸດທະສາດຫ້າຫຼ່ຽມກຳລັງດຳເນີນການໄລຍະທີ 1 ໃນ 5 ດ້ານໄດ້ແກ່: ການຂະຫຍາຍຕົວ, ການຈ້າງງານ, ຄວາມສະເໝີພາບ, ປະສິດທິພາບ ແລະ ຄວາມຍືນຍົງ ພ້ອມທັງກ່າວຕື່ມວ່າ: ຫຼັກສຳຄັນ 5 ປະການຂອງຍຸດທະສາດນີ້ໄດ້ແກ່ຄົນ, ຖະໜົນຫົນທາງ, ນ້ຳ, ໄຟຟ້າ ແລະ ເຕັກໂນໂລຊີ ໂດຍສະເພາະເຕັກໂນໂລຊີດ້ານດີຈີຕອນ.

ທ່ານ ຮຸນ ມາເນັດ ກ່າວວ່າ: ກຳປູເຈຍກຳລັງປ່ຽນຜ່ານສະຖານະຈາກປະເທດພັດທະນານ້ອຍທີ່ສຸດ ກ້າວຂຶ້ນສູ່ປະເທດກຳລັງພັດທະນາພາຍໃນປີ 2027 ໂດຍຕັ້ງເປົ້າໝາຍການຂະຫຍາຍຕົວທາງດ້ານເສດຖະກິດຢ່າງຕໍ່ເນື່ອງທີ່ 5,6% ໃນປີນີ້ ເຊິ່ງຈະເພີ່ມຂຶ້ນຈາກ 5,2% ໃນປີ 2022.




# ວິທີເຮັດວຽກ

**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

**ງ) ພະຍາດຖືກຽດສ່ວນຕົວ:**

ພະຍາດຕົວນີ້ ມີຫຼາຍປາກົດການທີ່ສະແດງອອກ ດັ່ງລຸ່ມນີ້:

1. ມີເລື່ອງຫຍັງ ບໍ່ມັກຕຳໜິຕໍ່ໜ້າ ແລ້ວພັດເອົາໄປເວົ້າລັບຫຼັງ. ເວລາເປີດກອງປະຊຸມບໍ່ເວົ້າຫຍັງ ຫຼັງຈາກປິດກອງປະຊຸມແລ້ວຈຶ່ງເວົ້າ, ບໍ່ມີຈັກເທື່ອທີ່ຈະສະເໜີອັນນັ້ນອັນນີ້ຕໍ່ພັກ, ບໍ່ປະຕິບັດຕາມຫຼັກດຳເນີນຊີວິດຂອງພັກ, ໂຕມັກແນວໃດກໍເຮັດແນວນັ້ນ.
2. ຢາກເຮັດໃຫ້ແຕ່ແລ້ວວຽກ ຜູ້ໃດມີຈຸດດີກໍບໍ່ຢາກຮຽນ ຜູ້ໃດມີຂໍ້ບົກພ່ອງກໍບໍ່ຢາກຕຳໜິ.
3. ບໍ່ນັບຖືຄຳສັ່ງສອນຂອງຂັ້ນສູງ, ບໍ່ປະຕິບັດຕາມລະບຽບວິໄນ, ມີແຕ່ເຮັດຕາມໃຈໂຕມັກ.
4. ເວລາຕຳໜິຜູ້ໃດ ກໍບໍ່ແມ່ນເຮັດເພື່ອປະໂຫຍດຂອງພັກ ບໍ່ແມ່ນເຮັດເພື່ອຊ່ວຍກັນກ້າວໜ້າ, ບໍ່ແມ່ນເຮັດເພື່ອປະໂຫຍດວຽກງານຕ້ອງການ, ມີແຕ່ຕິຕຽນສ່ວນຕົວ ຖຽງເພື່ອຊະນະ ຖຽງເພື່ອແກ້ແຄ້ນ ເພື່ອທຳລາຍບັນຍາກາດອັນດີຕໍ່ກັນ.
5. ໄດ້ຍິນຄວາມວິພາກວິຈານອັນບໍ່ຖືກ ກໍເຮັດໃຫ້ເພີດເສີຍບໍ່ສູ້ຖຽງ, ຮອດວ່າໄດ້ຍິນຄວາມເວົ້າທີ່ຕ້ານການປະຕິວັດ ກໍບໍ່ເອົາລາຍງານໃຫ້ຂັ້ນສູງຮູ້, ໃຜເວົ້າຫຍັງ ໃຜເຮັດຫຍັງກໍຕາມຊ່າງ.
6. ພັກປະຊາຊົນ ກໍບໍ່ສືບສອນເບິ່ງ, ບໍ່ຖ້ອຍຖາມເຂົາເຈົ້າ, ບໍ່ໂຄສະນາ, ບໍ່ຊີ້ແຈງອະທິບາຍ, ເຮັດຄືປະຊາຊົນບໍ່ມີສິ່ງພົວພັນຫຍັງກັບໂຕ.
7. ເປັນສິ່ງທີ່ເປັນການເສຍຫາຍໃຫ້ແກ່ປະຊາຊົນກໍຕາມຊ່າງ ບໍ່ຕັກເຕືອນ ບໍ່ກີດຂວາງ ບໍ່ຊອກຊ່ອງທາງຫຼີກເວັ້ນ.
8. ເຮັດວຽກບໍ່ມີແຜນການ ພົບຫຍັງເຮັດອັນນັ້ນ, ເຮັດບໍ່ເປັນພີທີ, ເຮັດບໍ່ມີຂອບເຂດ, ເຮັດບໍ່ເຖິງຕົ້ນເຖິງປາຍ.

ອ່ານຕໍ່ສະບັບໜ້າ...

# ຄະນະກຳມະການຄຸ້ມຄອງແຫ່ງຊາດມຽນມາ ປັບປຸງຄະນະລັດຖະບານ



ຕອນຄ່ຳວັນທີ 25 ກັນຍານີ້ ໄດ້ມີລາຍງານຂ່າວໃຫ້ຮູ້ວ່າ: ຄະນະກຳມະການຄຸ້ມຄອງແຫ່ງຊາດມຽນມາ ໄດ້ປະກາດຄຳລັດຫຼາຍສະບັບ ໂດຍອີງຕາມຂໍ້ກຳນົດທີ່ກ່ຽວຂ້ອງຂອງລັດຖະທຳມະນູນ, ປັບປຸງຄະນະລັດຖະບານ ໂດຍໄດ້ແຕ່ງຕັ້ງ ແລະ ສັບຊ້ອນລັດຖະມົນຕີ ແລະ ເຈົ້າໜ້າທີ່ສຳຄັນຂອງອົງການລັດຖະບານຫຼາຍທ່ານ ໃນນັ້ນ, ຕົ້ນຕໍກ່ຽວພັນເຖິງກະຊວງການຄ້າ, ຫ້ອງວ່າການລັດຖະບານ ແລະ ຄະນະກຳມະການເລືອກຕັ້ງແຫ່ງລັດເປັນຕົ້ນ.

# ເຝົ້າໄວ້ ໄດ້ຍິດຮຽນ

❖ ວິເສດ ສະແຫວງສຶກສາ

# ຢ່າໃຫ້ກະແສຂ່າວໂລເລ ເຮັດໃຫ້ສັງຄົມເຮືອແພ

ມື້ນີ້ຂໍຕັ້ງຫົວບົດແບບໂກ້ໆເພື່ອໃຫ້ສົມກັບມາດຕະການຂອງບາງປະເທດທີ່ໃຊ້ຄວບຄຸມຂ່າວປອມ, ຂ່າວເສກສັນປັ້ນແຕ່ງ, ຂ່າວບິດເບືອນ ກໍຄືຂ່າວທີ່ຍຸຍົງສົ່ງເສີມຄວາມກຽດຊັງ, ໝິ່ນປະໝາດ ແລະ ຂົ່ມຂູ່ທີ່ມາພ້ອມກັບຍຸກດີຈີຕອນ ທີ່ມີເຕັກໂນໂລຊີ ຂໍ້ມູນຂ່າວສານລ້ຳສະໄໝເປັນຕົວຂັບເຄື່ອນທັງສູ່ຄວາມດີງາມ ແລະ ທັງສູ່ຄວາມເສື່ອມເສຍ, ຂຶ້ນກັບເປົ້າໝາຍການນຳໃຊ້.

ຢູ່ປະເທດ**ບຣາຊິນ** ໃນພາກພື້ນອາເມລິກາໃຕ້ນັ້ນ, ຂະບວນການກວດລ້າງອາຊະຍາກຳທາງອອນລາຍໄດ້ເລີ່ມຂຶ້ນໃນປີ 2018 ພ້ອມໆກັນໃນຫຼາຍຕົວເມືອງໃຫຍ່ໆ ເຊັ່ນ: ນະຄອນຣີໂອເດຊານາໂຣ, ນະຄອນຊາວໂປໂລ, ເມືອງເຣຊີເຟ, ກູຣິບາຕີ ຊານຕາມາເຣຍ ແລະ ວິລາເວັນຣາ. ອາຊະຍາກຳທາງອອນລາຍຢູ່ບຣາຊິນ ມີລັກສະນະຮ້າຍແຮງ ແລະ ເປັນອັນຕະລາຍທີ່ສຸດເພາະມັນເປັນຂ່າວ, ຂໍ້ຄວາມ, ຮູບພາບທີ່ຍຸຍົງສົ່ງເສີມໃຫ້ມີຄວາມລັງກຽດ ກຽດຊັງຄົນເຊື້ອຊາດເຜົ່າພັນຕ່າງໆພາຍໃນປະເທດ. ປະຊາກອນຂອງປະເທດບຣາຊິນ ນັ້ນມີຫຼາກຫຼາຍທີ່ສຸດ ເຊັ່ນ: ເຜົ່າພັນພື້ນເມືອງດັ້ງເດີມ, ເຜົ່າພັນທີ່ມີເຊື້ອສາຍເອີຣົບ ແລະ ຄົນຜິວດຳທີ່ສືບເຊື້ອມາຈາກທະວີບອາເມລິກາ. ຂ່າວບອກວ່າ ເຜົ່າພັນທີ່ຖືກບຽດບຽນ ແລະ ຈຳແນກຫຼາຍທີ່ສຸດແມ່ນພວກຜິວດຳ ໂດຍສະເພາະແມ່ນເພດຍິງ. ໜ່ວຍປະຕິບັດງານທີ່ທາງການບຣາຊິນ ໄດ້ຕັ້ງຂຶ້ນເພື່ອເລີກຮື້ກຸ່ມອາຊະຍາກຳທາງອອນລາຍນີ້ ມີຊື່ວ່າ: “Operation Bravata” ເຊິ່ງປະກອບດ້ວຍກອງກຳລັງຕຳຫຼວດເປັນຕົ້ນຕໍ. ການປະຕິບັດງານເລີ່ມຂຶ້ນໃນເດືອນພຶດສະພາ 2018 ດ້ວຍຜົນສຳເລັດເປັນຢ່າງດີ ຄືສາມາດຈັບກຸມທ້າວ ຊິນ ເວຣາເມໂລ ແລະ ພັກພວກອີກ 6 ຄົນ. ທ້າວ ຊິນເວຣາ ຄົນນີ້ ແມ່ນເຈົ້າພໍ່ ທີ່ເຄື່ອນໄຫວໃຊ້ສື່ສັງຄົມປູກຝັງແນວຄິດຈຳແນກເຊື້ອຊາດໃນລັກສະນະຟາດຊິດ-ນາຊີ ເບິ່ງຮິດເລີຢູ່ເຢຍລະມັນໃນສົງຄາມໂລກຄັ້ງທີ 2. ເປົ້າໝາຍຂອງທ້າວ ຊິນເວຣາ ກໍຄືຈັດການພວກຄົນ+ຜິວດຳເຊື້ອສາຍ ອາເມຣິກາ ແລະ ຄົນໃນກຸ່ມຮັກຮ່ວມເພດ ດ້ວຍຮູບການຂົ່ມຂືນ ແລະ ຄາດຕະກຳໄປພ້ອມກັບໃຊ້ຮູບ




ການຂົ່ມຂູ່ ວາງລະເບີດຕາມສະຖານທີ່ທາງການ ແລະ ມະຫາວິທະຍາໄລຕ່າງໆທົ່ວປະເທດ. ກຸ່ມອາຊະຍາກອນ ທີ່ທ້າວ ຊິນເວຣາ ກໍ່ຕັ້ງຂຶ້ນນັ້ນໃສ່ຊື່ວ່າ “ຄົນຂອງພະເຈົ້າ” ຫຼື Hombres Santos

ສຳລັບຢູ່ປະເທດ**ອິນເດຍ** ກໍມີຂ່າວອອກມາວ່າ ສານສູງຂອງປະເທດນີ້ ໄດ້ອອກຄຳສັ່ງປັບໃໝ 12 ບໍລິສັດສື່ມວນຊົນ ໃນເດືອນເມສາ 2018 ລາຍລະ 1 ລ້ານຣູປີ (ປະມານ 120 ລ້ານກີບຕາມມູນຄ່າປີ2018) ຍ້ອນມີຄວາມຜິດທີ່ໄດ້ລາຍງານຂ່າວ ຄະດີຂົ່ມຂືນເດັກຍິງ ໂດຍໄດ້ເປີດເຜີຍຊື່ຂອງຜູ້ເຄາະຮ້າຍ. ກົດໝາຍຂອງອິນເດຍນັ້ນ ໄດ້ກຳນົດຫ້າມເປີດເຜີຍຊື່ຂອງຜູ້ເຄາະຮ້າຍ ຈາກເຫດຂົ່ມຂືນ ເຖິງວ່າ ເຫຍື່ອໄດ້ເສຍຊີວິດແລ້ວກໍຕາມ. ນອກຈາກໂທດປັບໃໝແລ້ວ, ກົດໝາຍຍັງໄດ້ກຳນົດໂທດຕັດອິດສະຫຼະພາບຜູ້ກະທຳຜິດສູງສຸດ 2 ປີ. ຜູ້ກະທຳຜິດຕ້ອງຈ່າຍເງິນຄ່າປັບໃໝພາຍໃນ 1 ອາທິດ ຫຼັງຈາກໄດ້ຮັບຄຳສັ່ງ ແລະ ເງິນດັ່ງກ່າວຈະຖືກນຳໃຊ້ເພື່ອຊົດເຊີຍຜູ້ທີ່ຕົກເປັນເຫຍື່ອ. ກົດໝາຍອິນເດຍ ຖືວ່າການເປີດເຜີຍຊື່ຜູ້ເຄາະຮ້າຍນັ້ນຈະສ້າງມົນທິນໃຫ້ແກ່ຄອບຄົວຜູ້ເຄາະຮ້າຍ ແລະ ເປັນການຢຽບຫຍາມ ຜູ້ເຄາະຮ້າຍ.

ຢູ່ປະເທດ**ອິດສະຕຣາລີ** ນັ້ນ ກໍມີກົດໝາຍລົງໂທດຕໍ່ບໍລິສັດສື່ສັງຄົມອອນລາຍທີ່ເປີດເຜີຍຮູບພາບກ່ຽວກັບເຫດການໃຊ້ຄວາມຮຸນແຮງຜ່ານອິນເຕີເນັດ ດ້ວຍການປັບໃໝເປັນເງິນສູງສຸດ 10% ຂອງລາຍໄດ້ທັງໝົດຂອງບໍລິສັດທີ່ກ່ຽວຂ້ອງ ບວກກັບໂທດຈຳຄຸກສູງສຸດອີກ 3 ປີ ສຳລັບຜູ້ອຳນວຍການຂອງບໍລິສັດທີ່ມີຄວາມຜິດ. ຢູ່ບາງປະເທດໃນອາຊຽນກໍມີກົດໝາຍຫ້າມສື່ສັງຄົມເປີດເຜີຍຮູບພາບຄວາມຮຸນແຮງ ເຊັ່ນ ຮູບຄົນບາດເຈັບ ລົ້ມຕາຍຈາກເຫດການກໍ່ການຮ້າຍ ແລະ ອື່ນໆ ເພາະຖືວ່າເປັນຮູບພາບທີ່ຂົ່ມຂວັນ ແລະ ສ້າງຄວາມສະເທືອນໃຈໃນສັງຄົມຢ່າງໜັກໜ່ວງ.




## ເຄື່ອງແບບໂຮງຮຽນ

#ບາວກະບື

ເດັກຍິງຖືກຄູໃຈໂກໄລ່ກັບຄືນເຮືອນຍ້ອນນາງບໍ່ນຸ່ງເຄື່ອງແບບນັກຮຽນ. ເຄິ່ງຊົ່ວໂມງຕໍ່ມາ, ນາງນ້ອຍກັບຄືນໄປໂຮງຮຽນ, ຕົນໂຕຂອງນາງປຽກລົ້ນລົນຍ້ອຍປົບໆ. "ນີ້ມັນແປວ່າແນວໃດ?" ຄູຂອງນາງຖາມ. "ອາຍຄູບອກໃຫ້ລູກນ້ອຍມືອນຸ່ງເຄື່ອງແບບນັກຮຽນ ແຕ່ເຄື່ອງທັ້ນ ລູກນ້ອຍພວມແຊ່ໄວ້ຊັກ" ເດັກຍິງຜູ້ຍາກລົບຕອບ.

## SCHOOL CLOTHES

#BAOKBU

A girl was sent home by an angry teacher for not wearing her school uniform. she returned half an hour later dripping wet. "What's the meaning of this?" demanded her teacher. "you told me to wear my school clothes. But they were in the wash!" said the miserable girl.

ອ່ານມ່ວນ ຊວນ ຍິ້ມ




ໄຟເຫຼືອງຄວນຫຼຸດຄວາມໄວ

● ໂດຍ : ພູຜາ

ທະນາຄານພັດທະນາລາວ LDB Bank

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ LUANG PRABANG POWER COMPANY LIMITED

ກຸ່ມບໍລິສັດ ອີພີແອວ ຈຳກັດຜູ້ດຽວ EPL GROUP SOLE CO.,LTD

**ຜູ້ຊີ້ນຳ :** ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :** ທ່ານ ສີສຸພັນ ແສງສະຫວັນ; ທ່ານ ວິເສດ ສະແຫວງສຶກສາ; ທ່ານ ທອງດາ ສຸພາສິດ; ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ :** ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ; ທ່ານ ອັນທະວີ ວົງພະຈັນ ຮອງ; ທ່ານ ເປຄຳ ລໍຄຳສອນ ຮອງ

**ກອງບັນນາທິການ :** ນາງ ກົງໃຈ ແສງອຳພັນ; ນາງ ສຸພາວັນ ທອມສະນິດ; ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :** ນາງ ນິດຕາ ຄຸນປາກດີ